ປົ້ມປົກຂາວ

ໂອກາດໃນການພັດທະນາການປູກໄມ້ເສດຖະກິດ ແລະ ອຸດສາຫະກຳປ່າໄມ້ປູກ ໃນ ສປປ ລາວ

ປຶ້ມປົກຂາວ

ໂອກາດໃນການພັດທະນາການປູກໄມ້ເສດຖະກິດ ແລະ ອຸດສາຫະກຳປ່າໄມ້ປູກ ໃນ ສປປ ລາວ

ໄດ້ຮັບທຶນຈາກ
ສະຫະພາບເອີຣົບ

ເອກະສານສະບັບນີ້ ສ້າງຂຶ້ນໂດຍໄດ້ຮັບການຊ່ວຍເຫລືອດ້ານການເງິນຈາກສະຫະພາບເອີຣົບ. ເນື້ອໃນຂອງເອກະສານສະບັບນີ້ຖືເປັນຄວາມຮັບຜິດຊອບຂອງສະພາການຄ້າ ເອີຣົບ ປະຈຳ ສປປ ລາວ ແຕ່ພຽງຜູ້ດຽວ ໂດຍບໍ່ໄດ້ສ່ອງແສງເຖິງທັດສະນະຄຳເຫັນໃດໆຂອງສະຫະພາຍບເອີຣົບ.

ເອກະສານສະບັບນີ້ ມີຈຸດປະສົງພຽງເພື່ອສະໜອງຂໍ້ມູນຂ່າວສານເທົ່ານັ້ນ ແລະ ບໍ່ແມ່ນເພື່ອພິມເຜີຍແຜ່ ແລະ ແຈກຢາຍທົ່ວໄປ.

© 2020 ສະພາການຄ້າ ແລະ ອຸດສາຫະກຳເອີຣົບ ປະຈຳ ສປປ ລາວ

ຂໍສະຫງວນລິຂະສິດທີ່ມີຕໍ່ເອກະສານສະບັບນີ້. ຫ້າມບໍ່ໃຫ້ສ້າງຄືນ, ແຈກຢາຍ ຫຼືສິ່ງພາກສ່ວນໃດໜຶ່ງຂອງເອກະສານສະບັບນີ້ໃນ ຮູບແບບ ຫລື ທຸກຮູບການ ເຊິ່ງລວມທັງການອັດສຳເນົາ, ການບັນທຶກຈົດກ່າຍ ຫຼື ນຳໃຊ້ວິທີການທາງອີເລັກໂຕຣນິກ ຫລື ວິທີອື່ນ ໆ ເພື່ອຈຸດປະສົງທີ່ກ່າວມານັ້ນ ໂດຍປາສະຈາກການໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກ ECCIL ຍົກເວັ້ນກໍລະນີການຢືມ ຄຳເວົ້າໂດຍຫຍໍ້ ເພື່ອຮັບໃຊ້ໃນການທົບທວນສຳຄັນ ແລະ ການນຳໃຊ້ອື່ນໆ ທີ່ບໍ່ແມ່ນເພື່ອຈຸດປະສົງທາງທຸລະກິດ ຫລື ການຄ້າຕາມ ຂອບເຂດທີ່ມີກົດໝາຍວ່າດ້ວຍລິຂະສິດອະນຸຍາດ. ສຳລັບການຂໍອະນຸຍາດ, ແມ່ນໃຫ້ຂຽນຄຳຮ້ອງໄປຫາ ECCIL ຕາມທີ່ຢູ່ຂ້າງລຸ່ມ ນີ້.

ທີ່ຢູ່: ວິລາ ອິນແປງ, ຕັ້ງຢູ່ເຮືອນເລກທີ 74, ຖະໜົນອິນແປງ ບ້ານວັດຈັນ, ນະຄອນຫວງວຽງຈັນ
ຕູ້ໄປສະນີ: 11781 ເມືອງຈັນທະບູລີ, 1000
ໂທ: +856 21 264330

ສະຫລຸບຫຍໍ້

ຄວາມຕ້ອງການໄມ້ ແລະ ຜະລິດຕະພັນໄມ້ຂອງພາກພື້ນທີ່ເພີ່ມຂຶ້ນຢ່າງວ່ອງໄວ ແລະ ປະກອບກັບການປ່ຽນແປງທາງດ້ານນິຕິກຳ ແລະ ລະບຽບການທີ່ສົ່ງເສີມກັນ ແລະ ກັນ, ເຮັດໃຫ້ເກີດໂອກາດໃຫ້ແກ່ການລົງທຶນຂອງພາກເອກະຊົນໃນອຸດສາຫະກຳປ່າປູກທີ່ທັນສະໄໝໃນ ສປປ ລາວ. ບົດສຶກສານີ້ ແມ່ນສ່ວນເພີ່ມຕື່ມໃນບົດສຶກສາຄົ້ນຄວ້າຕ່າງໆທີ່ພວມດຳເນີນການໃນປະຈຸບັນ ແລະ ຂໍ້ສະເໜີຂອງລັດຖະບານລາວ ຊຶ່ງໄດ້ຮັບການສະໜັບສະໜູນຈາກກຸ່ມທະນາຄານໂລກ, ກອງທຶນ Swedfund ແລະ ຄູ່ຮ່ວມມືໃຫ້ທຶນຊ່ວຍເຫຼືອແບບສອງຝ່າຍ ເຊັ່ນ ສູນຄົ້ນຄວ້າກະສິກຳສາກົນ ຂອງ ປະເທດ ອົດສະຕຣາລີ (ACIAR) ໂດຍຮັບຮູ້ຄຳແນະນຳຫຼາຍຢ່າງຈາກບົດສຶກສາເຫຼົ່ານັ້ນ, ບັນຫາສຳຄັນ ຕໍ່ໄປນີ້ ໄດ້ລະບຸໄວ້ ຄື:

ຄວາມຕ້ອງການໄມ້ ແລະ ຜະລິດຕະພັນໄມ້ຂອງຕະຫຼາດໂລກ ແລະ ພາກພື້ນ

ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄວາມຕ້ອງການໄມ້ອຸດສາຫະກຳ ແລະ ອຸດສາຫະກຳໄມ້ ຂອງໂລກ ແລະ ພາກພື້ນ ແມ່ນສຳຄັນຢ່າງຍິ່ງ ເພື່ອສະໜັບສະໜູນການພັດທະນາປູກໄມ້, ລວມເຖິງ ເຈົ້າຂອງທີ່ດິນຂະໜາດນ້ອຍ. ຂໍແນະນຳວ່າ ຄວນສ້າງກົນໄກ ສຳລັບການທົບທວນຄືນທີ່ເປັນອິດສະຫຼະ ແລະ ການແບ່ງປັນຄວາມຮູ້ກ່ຽວກັບທ່າອ່ຽງຂອງພາກພື້ນ ແລະ ຂອງໂລກສຳລັບອຸດສາຫະກຳໄມ້ປູກ, ໂດຍມີກະຊວງການທີ່ກ່ຽວຂ້ອງ ແລະ ໜ່ວຍງານຂອງພາກລັດ, ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ, ຜູ້ໃຫ້ທຶນຊ່ວຍເຫຼືອ ແລະ ພາກເອກະຊົນ; ໂດຍການສະເໜີມອບບົດບາດ ສຳລັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI) ແລະ ກຸ່ມ ປ່າປູກຂອງລາວ.

ຂໍແນະນຳວ່າ ຄວນດຳເນີນການທຸກບາດກ້າວທີ່ເປັນໄປໄດ້ ໂດຍທຸກຂັ້ນຂອງລັດຖະບານ ແລະ ການຄ້າ ເພື່ອຮັບປະກັນວ່າ ສະພາບແວດລ້ອມໃນການລົງທຶນ ຂອງ ສປປ ລາວ ເຮັດໜ້າທີ່ຢ່າງມີປະສິດທິພາບ ແລະ ສາມາດຄາດການໄດ້.

ຂະແໜງປ່າໄມ້ ແລະ ການປູກໄມ້ເສດຖະກິດ ໃນ ສປປ ລາວ

ໂອກາດໃນການສ້າງອຸດສາຫະກຳປ່າໄມ້ປູກທີ່ທັນສະໄໝ ໃນ ສປປ ລາວ ແລະ ຜົນປະໂຫຍດ ແລະ ບັນຫາທ້າທາຍທີ່ເກີດຂຶ້ນ ຍັງບໍ່ທັນໄດ້ຮັບຮູ້ພາຍໃນຊຸມຊົນຄົນລາວຢ່າງກວ້າງຂວາງ.

ຂໍແນະນຳວ່າ ຄວນເລີ່ມຕົ້ນສ້າງແຜນງານການສື່ສານໃນທາງບວກ ຊຶ່ງຈະແບ່ງປັນຄວາມຮັບຮູ້ກ່ຽວກັບຜົນກະທົບທີ່ຄາດວ່າຈະເກີດຂຶ້ນກັບ:

- ການພັດທະນາທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທັງດ້ານປະລິມານ ແລະ ຄຸນນະພາບ ເທົ່າທີ່ຈະເປັນໄປໄດ້.
- ຫຼາກຫຼາຍກຸ່ມທີ່ມີສ່ວນກ່ຽວຂ້ອງ ໂດຍສະເພາະ ປະຊາຊົນໃນທ້ອງຖິ່ນ.

ຂໍແນະນຳວ່າ ຄວນພະຍາຍາມຢ່າງຈິງຈັງ ເພື່ອແບ່ງປັນເລື່ອງເລົ່າກ່ຽວກັບປ່າປູກໃນທາງບວກຢ່າງກວ້າງຂວາງໃນ ສປປ ລາວ, ຜ່ານໂຮງຮຽນ, ໂທລະພາບ, ວິທະຍຸ, ສື່ສັງຄົມອອນລາຍ ແລະ ການນຳສະເໜີໃຫ້ແກ່ບຸກຄົນທີ່ສົນໃຈ ແລະ ປະຊາຊົນທີ່ມີອິດທິພົນໃນການສະໜັບສະໜູນ.

ສິ່ງສຳຄັນ ແມ່ນວ່າ ການສ້າງຄວາມດຸ່ນດ່ຽງທາງດ້ານຜົນປະໂຫຍດຂອງບັນດາຜູ້ມີສ່ວນກ່ຽວຂ້ອງ ສະແດງໃຫ້ເຫັນ ເຖິງຕ່ອງໂສ້ມູນຄ່າທັງໝົດ ຈາກການເພາະປູກ ໂດຍຜ່ານອຸດສາຫະກຳປ່າໄມ້ປູກ ແລະ ໄປຍັງຕະຫຼາດ, ຊຶ່ງຈະຮຽກຮ້ອງໃຫ້ມີການປະສານງານກັບບັນດາໜ່ວຍງານຂອງລັດຖະບານ ແລະ ສາທາລະນະຊົນ ກ່ຽວກັບການພັດທະນານະໂຍບາຍ ແລະ ສະຖາບັນການຈັດຕັ້ງ, ຊຶ່ງຊ່ວຍຊຸກຍູ້ໃຫ້ເກີດການຍອມຮັບຂອງສາທາລະນະຊົນທົ່ວໄປ.

ໂອກາດຕ່າງໆ ສຳລັບການຂະຫຍາຍປ່າໄມ້ປູກ

ລັດຖະບານລາວ ມີຈຸດມຸ່ງໝາຍຢ່າງຈະແຈ້ງ ເພື່ອບັນລຸຄວາມຍືນຍົງດ້ານການເງິນ ແລະ ສິ່ງແວດລ້ອມ, ການຂະຫຍາຍຕົວທາງດ້ານເສດຖະກິດທີ່ເຂັ້ມແຂງໝັ້ນທ່ຽງ ແລະ ມີສ່ວນຮ່ວມຂອງທຸກພາກສ່ວນ, ໂດຍສະເພາະ ຜ່ານການລົງທຶນຂອງພາກເອກະຊົນທີ່ໜ້າເຊື່ອຖືໄດ້. ການລົງທຶນ ໃນການປູກຕົ້ນໄມ້ທີ່ມີການຄຸ້ມຄອງແບບຍືນຍົງ ຈະຊ່ວຍໃນການບັນລຸເປົ້າໝາຍການພັດທະນາແຫ່ງຊາດທີ່ຫຼາກຫຼາຍນີ້ໄດ້ ໃນ ສປປ ລາວ. ການປັບປຸງເງື່ອນໄຂຄວາມພ້ອມ-ກ່ອນ ສຳລັບ ການລົງທຶນປູກໄມ້ ແລະ ການຫຼຸດຜ່ອນຄວາມສ່ຽງ ແມ່ນສຳຄັນຍິ່ງ ເພື່ອຊຸກຍູ້ການມີສ່ວນຮ່ວມຂອງພາກເອກະຊົນ.

ຂໍ້ແນະນຳວ່າ ການເປັນຄູ່ຮ່ວມມືຂອງພາກເອກະຊົນ ໂດຍໄດ້ຮັບການຊ່ວຍເຫຼືອປະສານງານຈາກລັດຖະບານ ແຫ່ງ ສປປ ລາວ ເພື່ອຊອກຫາ ຄວາມສອດຄ່ອງເໝາະສົມ ແລະ ຄວາມຈະແຈ້ງທາງດ້ານກົດໝາຍ ແລະ ລະບຽບການຕ່າງໆ ສຳລັບ:

- ຄວາມໝາຍສຳຄັນທາງດ້ານການເງິນໃນການລົງທຶນໃສ່ການປູກໄມ້ເສດຖະກິດ, ໂດຍສະເພາະ ກ່ຽວກັບບັນຫາ ອາກອນ ແລະ ລະບຽບການດ້ານສິ່ງແວດລ້ອມ;
- ການກຳນົດພື້ນທີ່ບໍລິເວນປ່າປູກ ແລະ ການຈັດສັນນຳໃຊ້ທີ່ດິນ, ໂດຍສະເພາະ ໃນເຂດ ແລະ ອ້ອມຮອບເຂດບໍລິເວນປ່າເສຍລິດ ຊຶ່ງຈະມີອິດທິພົນຢ່າງຫຼວງຫຼາຍຕໍ່ກັບການລົງທຶນ ແລະ ການເປັນຄູ່ຮ່ວມມືກັບບັນດາຊຸມຊົນ; ແລະ
- ການສ້າງຄວາມງ່າຍດາຍທາງດ້ານລະບຽບການ ທີ່ຄຸ້ມຄອງການນຳໃຊ້ທີ່ດິນ ແລະ ການຕະຫຼາດເສຍລິດຕະພັນໄມ້ ເພື່ອເຮັດໃຫ້ ຜູ້ປູກທັງຂະໜາດນ້ອຍ ແລະ ໃຫຍ່ ສາມາດຂຶ້ນທະບຽນຕົ້ນໄມ້ປູກຂອງພວກເຂົາ ແລະ ຕັດ ແລະ ຂາຍຕົ້ນໄມ້ປູກຂອງພວກເຂົາຢ່າງຖືກຕ້ອງຕາມກົດໝາຍ.

ຂໍ້ແນະນຳວ່າ ລັດຖະບານ ຄວນຊຸກຍູ້ໃນການຈັດສັນຊັບພະຍາກອນ ເພື່ອສະໜັບສະໜູນການປ່ຽນແປງທັງໝົດເຫຼົ່ານີ້, ແລະ ຄວນສ້າງຄວາມເຂັ້ມແຂງດ້ານການປະຕິບັດໃຫ້ສອດຄ່ອງກັບນິຕິກຳ, ການຕິດຕາມກວດກາ, ການລາຍງານ ແລະ ການແກ້ໄຂບັນຫາຕ່າງໆ.

ຂໍ້ແນະນຳວ່າ ຄວນເອົາໃຈໃສ່ຢ່າງພຽງພໍ ເພື່ອສະໜັບສະໜູນການຄົ້ນຄວ້າວິໄຈ ແລະ ພັດທະນາ ຜ່ານການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາໜ່ວຍງານການຄົ້ນຄວ້າວິໄຈ ແລະ ການສຶກສອນ ແລະ ເຊື່ອມໂຍງກັບບັນດາໜ່ວຍງານຄົ້ນຄວ້າວິໄຈ ແລະ ມະຫາວິທະຍາໄລພາຍນອກ.

ບັນຫາທ້າທາຍໃນການລົງທຶນ

ຂະບວນການທີ່ເປັນທາງການຊຶ່ງກ່ຽວຂ້ອງກັບການກຳນົດບໍລິເວນພື້ນທີ່ສຳລັບການປູກຕົ້ນໄມ້ເສດຖະກິດພາຍໃນເຂດບໍລິເວນປ່າເສຍລິດ ແລະ ຈາກນັ້ນ, ການຈັດສັນບໍລິເວນພື້ນທີ່ເໝາະສົມ ສຳລັບການປູກຕົ້ນໄມ້ເສດຖະກິດ ແມ່ນສິ່ງສຳຄັນຍິ່ງ ສຳລັບ ການລົງທຶນໄລຍະຍາວທີ່ຖືກຕ້ອງຕາມກົດໝາຍ.

ຂໍ້ແນະນຳວ່າ ບັນດານັກລົງທຶນ ຄວນເຮັດວຽກຢ່າງໃກ້ຊິດກັບໜ່ວຍງານຕ່າງໆຂອງພາກລັດ ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອຈັດໃຫ້ການຕີຄວາມໝາຍຂອງກົດໝາຍ ແລະ ລະບຽບການຕ່າງໆໃຫ້ຈະແຈ້ງ ແລະ ປະຕິບັດເປັນເອກະພາບສອດຄ່ອງກັນ.

ບັນດາຊຸມຊົນ ແລະ ເຈົ້າຂອງດິນຂະໜາດນ້ອຍທີ່ມີດິນເຊື່ອມຕໍ່ຕິດກັບທີ່ດິນບໍລິເວນປ່າເສຍລິດ ຊຶ່ງໄດ້ຖືກຈັດສັນຢ່າງເປັນທາງການໃຫ້ແກ່ນັກລົງທຶນເພື່ອປູກຕົ້ນໄມ້ເສດຖະກິດ ອາດຈະມີຄວາມກ່ຽວຂ້ອງກັບທີ່ດິນແບບເປັນທາງການ ແລະ ບໍ່ເປັນທາງການມາກ່ອນໜ້າ. ການຮ່ວມມືກັບບັນດາຊຸມຊົນ ແມ່ນສຳຄັນຍິ່ງ ເພື່ອເຂົ້າໃຈການຕີຄວາມໝາຍຂອງນິຕິກຳກ່ຽວກັບ ສິດຂອງຊຸມຊົນທີ່ຖືກຜົນກະທົບ ແລະ ຄວາມຊອບທຳຂອງການຮຽກຮ້ອງຄອບຄອງທີ່ດິນທາງດ້ານກົດໝາຍ ຊຶ່ງເຮັດໃຫ້ເກີດຜາລະຄວາມຮັບຜິດຊອບຂອງບັນດາບໍລິສັດເອກະຊົນທີ່ຢຶດໝັ້ນກັບມາດຕະຖານການປະຕິບັດ-ທີ່ດີສຸດສຳລັບການລົງທຶນ.

ຂໍ້ແນະນຳວ່າ ບັນດາບໍລິສັດ ຢຶດໝັ້ນໃນການປະຕິບັດຕາມຂັ້ນຕອນທີ່ແນະນຳ ໂດຍໃຊ້ຫຼັກການການຍິນຍອມທີ່ບໍ່ມີການບັງຄັບ, ຕ້ອງໄດ້ຮັບເຫັນດີລ່ວງໜ້າ ແລະ ທີ່ມີການແຈ້ງບອກຂໍ້ມູນທັງໝົດທີ່ກ່ຽວຂ້ອງກ່ອນ (FPIC) ໃນການດຳເນີນການກັບບັນດາຊຸມຊົນທີ່ຖືກຜົນກະທົບ, ພ້ອມກັບຫຼັກການ ທີ່ສາມາດເຂົ້າເຖິງໄດ້ທົ່ວໄປ ແລະ ໂປ່ງໃສຂອງ ESIA ຫຼື IEE ດັ່ງທີ່ກຳນົດໄວ້ໃນກົດໝາຍ.

ຂະແໜງການປູກຕົ້ນໄມ້ທີ່ຂະຫຍາຍອອກ ແລະ ຖືກຄຸ້ມຄອງຈັດການແບບຍືນຍົງ ຈະເຮັດໃຫ້ເກີດຜົນປະໂຫຍດຢ່າງໃຫຍ່ຫຼວງຕໍ່ ສປປ ລາວ, ຊຶ່ງການຈັດໃຫ້ມີການນຳໃຊ້ທີ່ດິນຂອງຊາວສວນ ແລະ ເຂດບໍລິເວນປ່າເສຍລິດທີ່ເສື່ອມໂຊມເພື່ອກໍ່ໃຫ້ເກີດຜົນຜະລິດສູງ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ຜົນກະທົບທີ່ເປັນປະໂຫຍດນີ້ ຈະເກີດຂຶ້ນໄດ້ ກໍຕໍ່ເມື່ອວ່າ ນັກລົງທຶນ ຍັງຄົງເຊື່ອໝັ້ນວ່າ ສະພາບເງື່ອນໄຂສຳລັບການລົງທຶນ ຍັງຄົງເອື້ອອຳນວຍ ແລະ ບັນດາກົດໝາຍ ແລະ ລະບຽບການ ແມ່ນຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບດຽວ ແລະ ສອດຄ່ອງກັນ.

ຂໍ້ແນະນຳວ່າ ລັດຖະບານ ແລະ ນັກລົງທຶນ ເຮັດວຽກຮ່ວມກັນ ເພື່ອຮັບປະກັນວ່າ ບັນດາກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແມ່ນບັງຄັບໃຊ້ຢ່າງສອດຄ່ອງເປັນເອກະພາບກັນ ແລະ ຄວນພິຈາລະນາໃນການສະເໜີໃຫ້ມີການສ້າງຕັ້ງ ໜ່ວຍງານການປະຕິບັດກົດໝາຍແຫ່ງຊາດ ສຳລັບປ່າໄມ້ປູກ ແລະ ມາດຕະຖານປ່າໄມ້ແຫ່ງຊາດ.

ບົດລາຍງານລວມ

ຄວາມຕ້ອງການໄມ້ ແລະ ຜະລິດຕະພັນໄມ້ຂອງຕະຫຼາດໂລກ ແລະ ພາກພື້ນ

ຄຳອະທິບາຍກ່ຽວກັບບັນຫາ

“ໄມ້ ແມ່ນສິ່ງທີ່ດີ” ແລະ ເປັນຄວາມຕ້ອງການພື້ນຖານສຳລັບການດຳລົງຊີວິດແບບດັ້ງເດີມ ແລະ ຮ່ວມສະໄໝ ຊຶ່ງເປັນຊັບພະຍາກອນທີ່ສາມາດທົດແທນໄດ້ ແລະ ຖືການນຳໃຊ້ເຂົ້າໃນການກໍ່ສ້າງ, ປະດັບເອ້ຢ້ອງ ແລະ ເຮັດໃຫ້ເກີດຄວາມອົບອຸ່ນເພື່ອປຸງແຕ່ງອາຫານຂອງຄົວເຮືອນ, ສາມາດນຳມາຜະລິດເປັນເຈ້ຍເພື່ອຂຽນ, ຫຸ້ມຫໍ່, ທຳຄວາມສະອາດ ແລະ ອະນາໄມ. ໃນຊີວິດປະຈຳວັນຂອງຄົນເຮົາ, ຖ້າຫາກປາດສະຈາກ ໄມ້ ແລະ ເຈ້ຍແລ້ວ ກໍເປັນໄປໄດ້ຍາກໃນທາງປະຕິບັດວຽກຕ່າງໆ.

ຄວາມຕ້ອງການ ສຳລັບໄມ້ອຸດສາຫະກຳຂອງໂລກ ແມ່ນເພີ່ມຂຶ້ນ ໂດຍການຄາດຄະເນຄວາມຕ້ອງການໄມ້ໃນແຕ່ລະປີ ແມ່ນ ເພີ່ມຂຶ້ນຈາກ 3.401 ລ້ານ ມ^3 ໃນປີ 2010 ມາເປັນ 7.553 ລ້ານ ມ^3 ພາຍໃນປີ 2030 ແລະ ສູງເຖິງ 13.082 ລ້ານ ມ^3 ພາຍໃນປີ 2050[1] ແລະ ໄມ້ປູກທີ່ໄດ້ຈາກການເພາະປູກ ຈະເປັນສິ່ງສຳຄັນຍິ່ງ ເພື່ອຕອບສະໜອງຄວາມຕ້ອງການນີ້. ການຄາດຄະເນໃນປະຈຸບັນ ເຫັນວ່າ ຄວາມຕ້ອງການຂອງໂລກ ເພີ່ມຂຶ້ນເຖິງ 300% ສຳລັບໄມ້ອຸດສາຫະກຳຊະນິດໄມ້ປູກ ຕະຫຼອດ 30 ປີຕໍ່ໜ້າ ຊຶ່ງສ່ວນໃຫຍ່ ແມ່ນຖືກຂັບເຄື່ອນຈາກບັນດາເສດຖະກິດທີ່ພວມຈະເລີນເຕີບໂຕໃໝ່, ແລະ ສາມາດເຫັນໄດ້ ເຖິງ ການຂາດແຄນໄມ້ປູກ ເຖິງ 4,5 ຕື້ ມ^3 ຕໍ່ປີພາຍໃນປີ 2050[2]. ການຂາດແຄນດັ່ງກ່າວ ແມ່ນຈຳນວນມະຫາສານ ແລະ ສິ່ງຜົນກະທົບຕໍ່ເນື່ອງສຳລັບພາກພື້ນອາຊີ, ໂດຍຈາກການປະເມີນອີກສະຫຼັ[3] ກ່ຽວກັບການສະໜອງເນື້ອໄມ້ສະເພາະ ເຫັນວ່າ ການຂາດແຄນໄມ້ຂອງພາກພື້ນອາດຈະມີເຖິງ 4,9 ລ້ານ bdmt[4] ພາຍຫຼັງປີ 2023.



ຮູບທີ 1 ການຊົມໃຊ້ຕໍ່ຫົວຄົນຂອງໂລກສຳລັບຜະລິດຕະພັນຈາກປ່າໄມ້ ແລະ GDP[5]

ການຂະຫຍາຍຕົວຂອງເສດຖະກິດໂລກນັບແຕ່ປີ 2000-2018 ເຫັນໄດ້ວ່າ ເຕີບໂຕ 2,7 ເທົ່າ, ປະຊາກອນໂລກ ເພີ່ມຂຶ້ນ 1,5 ຕື້ຄົນ ແລະ ປະຊາກອນທີ່ມີລາຍໄດ້-ປານກາງ ເພີ່ມຂຶ້ນປະມານ 1,5 ຕື້ ຫາ 3,8 ຕື້ຄົນ[6]. ໃນໂລກ ບໍ່ພຽງແຕ່ມີຈຳນວນຄົນທີ່ເພີ່ມຂຶ້ນເທົ່ານັ້ນ, ແຕ່ຍັງເປັນປະຊາກອນທີ່ມີຄວາມມັ່ງຄັ່ງຮັ່ງມີເພີ່ມຂຶ້ນອີກດ້ວຍ.
ບັນດາຊຸມຊົນທີ່ມີຄວາມມັ່ງຄັ່ງຮັ່ງມີນັ້ນ ຊົມໃຊ້ໄມ້ເພີ່ມຂຶ້ນ, ແລະ ທັງມີການເຕີບໂຕທາງດ້ານຈຳນວນປະຊາກອນ ແລະ ຄວາມມັ່ງຄັ່ງຂອງໂລກ, ຄວາມຕ້ອງການສຳລັບຜະລິດຕະພັນໄມ້, ໄມ້ແຜ່ນ ແລະ ຜະລິດຕະພັນເຍື່ອໄມ້ ເຊັ່ນ ເຈ້ຍເຊັດ (ທິສຊູ), ເຈ້ຍຫຸ້ມຫໍ່ ແລະ ແຜ່ນເຈ້ຍ ກໍເພີ່ມຂຶ້ນເຊັ່ນກັນ (ຮູບທີ 1). ທ່າອ່ຽງເຫຼົ່ານີ້ ສະແດງໃຫ້ເຫັນ ຜ່ານການເຕີບໂຕທາງດ້ານເສດຖະກິດໃນ ສປ ຈີນ, ໂດຍຈາກປີ 2000 ຫາ 2014, GDP ຕໍ່ຫົວ

[1] ການປູກຕົ້ນໄມ້ລຸ້ນໃໝ່ (2018). ແຟ້ມຝອມການປູກຕົ້ນໄມ້ລຸ້ນໃໝ່ 2007 – 2017. ການປູກຕົ້ນໄມ້ເພື່ອປະຊາຊົນ, ໂລກ ແລະ ຄວາມຈະເລີນຮຸ່ງເຮືອງ. 103 p. ເບິ່ງໄດ້ທີ່: https://newgenerationplantations.org/multimedia/file/ff98c77e-77cb- 11e3-92fa-005056986314
[2] Indufor (2012). ການທົບທວນໃນທາງຍຸດທະສາດກ່ຽວກັບອະນາຄົດຂອງການປູກຕົ້ນໄມ້. ບົດລາຍງານ ກະກຽມສຳລັບ ສະພາປ່າໄມ້ ສະຈອດຊິບ. ເຮວຊິ້ງກິ.
[3] ການທົບຄວນຄືນ ການສະໜອງຊິ້ນເນື້ອໄມ້ ແລະ ຄວາມຕ້ອງການໃນບັນດາປະເທດອາຊີປາຊີຟິກ. ສະພາບລວມຂອງ ການຄ້າທາງທະເລສຳລັບ ຊິ້ນເນື້ອໄມ້ທີ່ໃຊ້ເພື່ອຜະລິດເນື້ອເຍື່ອເຈ້ຍໃນອາຊີຕາເວັນອອກສ່ຽງໃຕ້. 51p
[4] bdmt = bone-dry metric tonne (ບໍລິມາດໂຕນຂອງເນື້ອໄມ້ແຫ້ງ). ຫົວໜ່ວຍມາດຕະຖານຂອງການວັດແທກການຄ້າເນື້ອໄມ້ແຫ້ງ (woodchip)
[5] Hetemäki, L., Palahí, M. and Nasi, R. 2020. ຄວາມຮູ້ສູ່ການປະຕິບັດ 01, ສະຖາບັນປ່າໄມ້ແຫ່ງເອີຣົບ. ttps://doi.org/10.36333/k2a01 [6] Hetemäki et al 2020. *Op. cit.*

ຄົນຕໍ່ປີ ເພີ່ມຂຶ້ນຈາກ US$995 ຫາ US$7.588, ການຊົມໃຊ້ໄມ້ແປຮູບເລື່ອຍ ແລະ ໄມ້ແຜ່ນ (ໄມ້ແຜ່ນຈາກເຍື່ອໄມ້ ແລະ ໄມ້ອັດ) ເພີ່ມຂຶ້ນ 20-ເທົ່າ, ຈາກການຊົມໃຊ້ໃນແຕ່ລະປີ ປະມານ 0,01 ຫາ 0,20 ມ^3 ຕໍ່ຄົນ, ນຳໄປສູ່ ການເພິ່ງພາເພີ່ມຂຶ້ນທັງທາງດ້ານການປູກໄມ້ພາຍໃນປະເທດ ທີ່ຂະຫຍາຍອອກ ແລະ ການນຳເຂົ້າຢ່າງຫຼວງຫຼາຍ[7]. ການເພີ່ມຂຶ້ນຂອງບັນດາຊຸມຊົນເມືອງ ແມ່ນນຳໃຊ້ໄມ້ ແລະ ເຍື່ອໄມ້ໃນວິທີທາງທີ່ແຕກຕ່າງ ກັບການນຳໃຊ້ໃນບັນດາຊຸມຊົນຊົນນະບົດ.

ຄວາມຕ້ອງການທີ່ເພີ່ມຂຶ້ນສຳລັບເນື້ອເຍື່ອໄມ້ໃນທາງເສດຖະກິດ ເພື່ອຕອບສະໜອງຄວາມຕ້ອງການເຫຼົ່ານີ້ ເຮັດໃຫ້ເກີດ ຄຳຖາມຄື: ແຫຼ່ງ ຊັບພະຍາກອນໄມ້ທີ່ຍືນຍົງ ເພື່ອສະໜັບສະໜູນຄວາມຕ້ອງການທີ່ເພີ່ມຂຶ້ນເຫຼົ່ານີ້ ແມ່ນຢູ່ໃສ ແລະ ຈະຢູ່ບ່ອນໃດ ?
ໂດຍທົ່ວໄປແລ້ວ, ການສະໜອງໄມ້ ສາມາດມາຈາກທຳມະຊາດ, ປ່າເຄິ່ງທຳມະຊາດ ຫຼື ປ່າໄມ້ປູກ. ປ່າເຫຼົ່ານີ້ ສາມາດເປັນຂອງລັດ ຫຼື ຂອງ ເອກະຊົນ. ໃນຂະນະທີ່ ໄມ້ຈາກປ່າທຳມະຊາດ ແມ່ນມີໜ້ອຍລົງ ແລະ ຖືກສະຫງວນໄວ້, ການສະໜອງ ຄາດວ່າຈະເພີ່ມຂຶ້ນຈາກປ່າໄມ້ປູກ. ໄມ້ ປູກ ຊຶ່ງກວມເອົາ 7% ຂອງປ່າໄມ້ທົ່ວໂລກ ສະໜອງໄດ້ 47% ຂອງໄມ້ທີ່ຕັດເກັບກ່ຽວທັງໝົດ[8]. ເນື້ອທີ່ສຳລັບປູກໄມ້ເສດຖະກິດຂະນິດໃຫຍ່ ໄວ ແມ່ນເພີ່ມຂຶ້ນ. ຕົວຢ່າງ, ເນື້ອທີ່ປູກຕົ້ນວິກໄມ້ເສດຖະກິດຂອງໂລກ ໄດ້ເພີ່ມຂຶ້ນ ຈາກ 10 ລ້ານເຮັກຕາ ມາເປັນ ຫຼາຍກວ່າ 30 ລ້ານ ເຮັກຕາ ຕະຫຼອດຊ່ວງ 30 ປີຜ່ານມາ (ຮູບທີ 3).

ການປູກໄມ້ເສດຖະກິດທີ່ມີການຄຸ້ມຄອງຈັດການຢ່າງເອົາໃຈໃສ່ໃນພາກພື້ນປ່າເຂດຮ້ອນ ສາມາດຜະລິດເນື້ອເຍື່ອໄມ້ພິເສດສະເພາະໄດ້ຢ່າງມີ ປະສິດທິພາບ: ໃນຂະນະທີ່ ປ່າຕົ້ນສົນເຄິ່ງ-ທຳມະຊາດ ໃນເຂດປະເທດສະແກນດິເນເວຍ ຕ້ອງການເຖິງ 720.000 ເຮັກຕາ ເພື່ອຜະລິດເນື້ອ ເຍື່ອໄມ້ ຫຼາຍລ້ານໂຕນຕໍ່ປີ, ການປູກຕົ້ນວິກໃນປະເທດ ບຣາຊິນ ສາມາດຜະລິດໄດ້ ຈຳນວນຄືກັນພຽງແຕ່ປູກໃນເນື້ອທີ່ 100.000 ເຮັກຕາ[9]. ໃນຂະນະທີ່ ຄວາມຕ້ອງການໄມ້ກົມ ຈະແຕກຕ່າງກັນໄປລະຫວ່າງປະເທດ ແລະ ພາກພື້ນ[10], ໄດ້ມີການຄາດຄະເນວ່າ ຈະມີຄວາມຕ້ອງການສູງເຖິງ 250 ລ້ານເຮັກຕາ ຂອງເນື້ອທີ່ໃໝ່ໃນການປູກຕົ້ນໄມ້ ເພື່ອຕອບສະໜອງກັບຄວາມຕ້ອງການໄມ້ເສດຖະກິດພາຍໃນປີ 2050[11] ຊຶ່ງເນື້ອທີ່ນັ້ນ ແມ່ນໃຫຍ່ກວ່າ 10 ເທົ່າຂອງເນື້ອທີ່ ສປປ ລາວ.



ຮູບທີ 2: ສະຖານະການດ້ານອຸປະທານ ແລະ ອຸປະສົງ, 2012 – 2050 (ແຫຼ່ງຂໍ້ມູນ: Indufor (2012)[12]

ການປູກຕົ້ນໄມ້ເສດຖະກິດ ເຮັດໃຫ້ມີພື້ນຖານສຳຄັນໃນການສະໜອງຊັບພະຍາກອນໄມ້ ໃຫ້ແກ່ອຸດສາຫະກຳປ່າຜະລິດທີ່ທັນສະໄໝ, ຄຸນະພາບ ທີ່ຄົງທີ່, ຕົ້ນທຶນຄ່າໃຊ້ຈ່າຍທີ່ສາມາດຄາດຄະເນໄດ້ ແລະ ການສະໜອງທີ່ເຊື່ອຖືໄດ້. ການຕອບສະໜອງຄວາມຕ້ອງການໝັ້ນຄົງຂອງຕະຫຼາດ ໄດ້ ເຮັດໃຫ້ເກີດການເພີ່ມຂຶ້ນຢ່າງໄວວາທາງດ້ານເນື້ອທີ່ການປູກຕົ້ນໄມ້ເສດຖະກິດທີ່ໃຫຍ່ໄວຂອງໂລກ. ຕະຫຼອດ 30 ປີຜ່ານມາ, ບັນດາປະເທດໃນ ພາກພື້ນ ເຊັ່ນ ສປ ຈີນ, ໄທ ແລະ ຫວຽດນາມ ໄດ້ຂະຫຍາຍເນື້ອທີ່ການປູກຕົ້ນໄມ້ເສດຖະກິດໃນພື້ນທີ່ການເພາະປູກ (ຮູບທີ 4, ຮູບທີ 5, ຮູບ ທີ 6) ຊຶ່ງເປັນການສົ່ງເສີມການລົງທຶນຂອງອຸດສາຫະກຳ ແລະ ເຮັດໃຫ້ຊາວສວນເຈົ້າຂອງທີ່ດິນຂະໜາດນ້ອຍຫຼາຍລ້ານຄົນ ສາມາດເພີ່ມລາຍຮັບ ຂອງພວກເຂົາ, ໃຫ້ການສະໜັບສະໜູນອຸດສາຫະກຳ ແລະ ສ້າງລາຍໄດ້ຈາກການສົ່ງອອກຫຼາຍລ້ານໂດລາ.

[7] Midgley, S. J., Stevens P.R. & Arnold R.J. (2017). ຊັບສິນທີ່ຖືກເຊື່ອງຊ້ອນໄວ້: ຊັບພະຍາກອນໄມ້ຂອງຊາວສວນຂະໜາດນ້ອຍຂອງອາຊີ ແລະ ການປະກອບສ່ວນຂອງ ພວກເຂົາເຂົ້າໃນຕ່ອງໂສ້ການສະໜອງຂອງໄມ້ເສດຖະກິດ. ປ່າໄມ້ອິດສະຕາລີ, DOI: 10.1080/00049158.2017.1280750

[8] ອົງການສະຫະປະຊາຊາດເພື່ອອາຫານ ແລະ ການກະເສດ (2015). ການປະເມີນຊັບພະຍາກອນປ່າໄມ້.

[9] Poyry (2012). ອະນາຄົດຈາກເຍື່ອໄມ້: ຈາກປ່າ ສູ່ຜະລິດຕະພັນສຳເລັດຮູບ. ບົດລາຍງານດ້ານເຕັກນິກ ສຳລັບ WBCSD/WWF, Gland, ສະວິດເຊີແລນ

[10] Hetemäki et al (2020). *Op. cit*.



ຮູບທີ 3 ຂະຫຍາຍຕົວຂອງເນື້ອທີ່ປູກຕົ້ນວິກຂອງໂລກ (ຮຕ) (1955 – 2019) (ແຫຼ່ງຂໍ້ມູນ: Arnold et al. 2020).



ຮູບທີ 5. ການຂະຫຍາຍຕົວຂອງການປູກຕົ້ນວິກໃນ ສປ ຈີນ(1955 – 2019). (ແຫຼ່ງຂໍ້ມູນ: Arnold et al. 2020).



ຮູບທີ 4. ການຂະຫຍາຍຕົວຂອງການປູກຕົ້ນວິກໃນ ປະເທດໄທ (1987 – 2020). ແຫຼ່ງຂໍ້ມູນ: Midgley S. J. and Ruenrith, P. (2020).



ຮູບທີ 6. ການຂະຫຍາຍຕົວຂອງການປູກຕົ້ນວິກໃນ ປະເທດ ຫວຽດນາມ (1987 – 2020). ແຫຼ່ງຂໍ້ມູນ: https://insights.risiinfo.com/vietnam-hard-wood- chip-exports/index.html

ການສະໜອງໄມ້ຈາກເຈົ້າຂອງທີ່ດິນຂະໜາດນ້ອຍ ສາມາດຕື່ມເຕັມໃຫ້ແກ່ຊັບພະຍາກອນໄມ້ຜະລິດແບບດັ້ງເດີມໄດ້, ໃນຂະນະທີ່ ການຄາດຄະເນຕົວເລກດັ່ງກ່າວ ແມ່ນຂ້ອນຂ້າງຍາກ, ສັດສ່ວນການສະໜອງໄມ້ເສດຖະກິດຂອງໂລກເປັນຈຳນວນຫຼວງຫຼາຍນັ້ນ ປະຈຸບັນ ແມ່ນມາຈາກເຈົ້າຂອງທີ່ດິນຂະໜາດນ້ອຍ. ໃນທົ່ວໂລກແລ້ວ, ເຈົ້າຂອງທີ່ດິນຂະໜາດນ້ອຍ ຄາດວ່າວ່າ ຈະຜະລິດໄມ້ປູກໄດ້ ລະຫວ່າງ $2 - $4 ຕື້ໂດລາ ທີ່ເປັນມູນຄ່າເບື້ອງຕົ້ນຂອງຜະລິດຕະພັນໃນແຕ່ລະປີ[13]. ເນື່ອງຈາກ ຄວາມຕ້ອງການໄມ້ ຍັງສືບຕໍ່ເພີ່ມຂຶ້ນ, ຄວາມຕ້ອງການອັນຈຳເປັນ ເພື່ອດັດປັບການສະໜອງໄມ້ຜ່ານການປູກແບບດັ້ງເດີມ ແລະ ປູກໂດຍເຈົ້າຂອງທີ່ດິນຂະໜາດນ້ອຍ ຈະສືບຕໍ່ຂະຫຍາຍຕົວເພີ່ມຂຶ້ນ. ບັນຫາດັ່ງກ່າວນີ້ ແມ່ນເຫັນໄດ້ໃນບັນດາປະເທດໃກ້ຄຽງເຊັ່ນ:

- ໃນປະເທດໄທ, ເຈົ້າຂອງທີ່ດິນຂະໜາດນ້ອຍ ປະມານ 4 ລ້ານລາຍ ປູກຕົ້ນໄມ້ ປະມານ 900.000 ເຮັກຕາ ເພື່ອຕອບສະໜອງກັບ ຄວາມຕ້ອງການທາງເສດຖະກິດສຳລັບໂຮງງານປຸງແຕ່ງເນື້ອເຍື່ອໄມ້, ໂຮງເລື່ອຍໄມ້ ແລະ ການສ້າງພະລັງານມວນຊີວະພາບ.
- ໃນປະເທດຫວຽດນາມ, ຊັບພະຍາກອນການປູກຕົ້ນໄມ້ ປະກອບດ້ວຍເຈົ້າຂອງທີ່ດິນຂະໜາດນ້ອຍ ແລະ ຄາດວ່າ 800.000 ເຮັກຕາ ຈາກ 2 ລ້ານເຮັກຕາປູກຕົ້ນຢາງໃນປະເທດ ຊຶ່ງເຮັດໃຫ້ມີລາຍຮັບແກ່ເຈົ້າຂອງທີ່ດິນຂະໜາດນ້ອຍ ເກີນກວ່າ USD 500 ລ້ານໂດລາ.
- ໃນແຂວງ ກວ້າງຊີ່ ທາງພາກໃຕ້ຂອງ ສປ ຈີນ, ເຈົ້າຂອງທີ່ດິນຂະໜາດນ້ອຍ ປູກຕົ້ນ ຢູຄາລິບຕັດ ຄາດວ່າເກີນກວ່າ 800.000 ເຮັກຕາ, ແລະ ຜົນຜະລິດໄມ້ໄດ້ເກີນກວ່າ 12 ລ້ານ ມ^3 ໃນແຕ່ລະປີ ເພື່ອສະໜັບສະໜູນອຸດສາຫະກຳ ໂດຍມູນຄ່າຜະລິດຕະພັນໃນແຕ່ລະປີ ແມ່ນ USD 2,4 ຕື້ໂດລາ.

ຜົນກະທົບຕໍ່ ສປປ ລາວ

ຄວາມຕ້ອງການຂອງພາກພື້ນສຳລັບໄມ້ເສດຖະກິດ ຈະຍັງຄົງສືບຕໍ່ເພີ່ມຂຶ້ນ ແລະ ການສະໜອງຈະຍັງຄົງບໍ່ພຽງພໍ, ຊຶ່ງເປັນການສ້າງໂອກາດໃຫ້ແກ່ ສປປ ລາວ ທີ່ຍັງບໍ່ທັນໄດ້ນຳໃຊ້ເນື້ອທີ່ດິນຢ່າງເຕັມສ່ວນ ຊຶ່ງ ລັດຖະບານ, ບັນດາຊຸມຊົນ ແລະ ບຸກຄົນ ອາດຈະຕ້ອງການນຳໃຊ້ທີ່ດິນ ເພື່ອປູກຕົ້ນໄມ້ເສດຖະກິດນີ້. ພັນຕົ້ນໄມ້ເສດຖະກິດທີ່ໃຫຍ່ໄວ ເຊັ່ນ ຕົ້ນວິກ ແລະ ຕົ້ນກະຖິນ (ອາຊາເຊຍ) ເຕີບໃຫຍ່ໄດ້ດີໃນ ສປປ ລາວ ແລະ ການປັບປຸງໂຄງລ່າງພື້ນຖານຂອງເສັ້ນທາງ ແລະ ເສັ້ນທາງລົດໄຟລາວ-ຈີນ ຈະເຮັດໃຫ້ມີການເຊື່ອມຕໍ່ໃໝ່ກັບຕະຫຼາດຕ່າງໆໄດ້.

[11] WWF. (2012). ບົດລາຍງານປ່າໄມ້ທີ່ຍັງຄົງມີຢູ່. ບົດທີ 4.
[12] Indufor (2012). ການທົບທວນໃນທາງຍຸດທະສາດກ່ຽວກັບອະນາຄົດຂອງການປູກຕົ້ນໄມ້. ບົດລາຍງານ ກະກຽມສຳລັບ ສະພາປ່າໄມ້ ສະຈວດຊິບ. ເຮວຊິງກີ.
[13] Verdone, M (2018). ພາກເອກະຊົນທີ່ໃຫຍ່ສຸດຂອງໂລກ? ການຮັບຮູ້ເຖິງມູນຄ່າສະສົມທາງເສດຖະກິດຂອງ ປ່າໄມ້ຂະໜາດນ້ອຍ ແລະ ຜູ້ຜະລິດສວນປ່າ. Gland, ສະວິດເຊີແລນ: IUCN, FAO, IIED ແລະ Agricord. X +22pp.

ເນື້ອທີ່ດິນປູກຕົ້ນວິກ ໃນ ສປປ ລາວ ຍັງມີໜ້ອຍ ໂດຍລວມແລ້ວ 50.000 ເຮັກຕາ ແລະ ສາມາດຫັນເປັນທຶນ ເພື່ອໃຫ້ປະສົບຜົນສຳເລັດ ຄືກັບບັນດາປະເທດໃກ້ຄຽງ ແລະ ສາຍພົວພັນທາງວິຊາການທີ່ດີເລີດທີ່ມີຢູ່ໃນບັນດາຜູ້ປູກໃນປະເທດເຫຼົ່ານັ້ນ. ມີຫຼາຍໂອກາດທີ່ເປີດກວ້າງໃນການຮ່ວມມື ເພື່ອແບ່ງປັນເຕັກໂນໂລຊີ ແລະ ເພື່ອເຂົ້າຮ່ວມໃນຕະຫຼາດລະຫວ່າງປະເທດ ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ.

ການຂະຫຍາຍຕົວຂອງເນື້ອທີ່ດິນຢ່າງຫຼວງຫຼາຍໃນການການປູກຕົ້ນໄມ້ເສດຖະກິດ ຈຳນວນ 200.000 ເຮັກຕາໃນ ສປປ ລາວ ອາດຈະດຶງດູດການລົງທຶນທີ່ສຳຄັນເຖິງ USD 440 – 500 ລ້ານສຳລັບການປູກຢ່າງດຽວ, ໂດຍຂຶ້ນກັບຕົ້ນທຶນຄ່າເຊົ່າທີ່ດິນທີ່ເຈລະຈາກັນ, ຄວາມຮຽກຮ້ອງຕ້ອງການໃນການເກັບກ້ຳລະເບີດທີ່ຍັງບໍ່ແຕກ (UXO), ເສັ້ນທາງ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ. ການສ້າງອຸດສາຫະກຳປຸງແຕ່ງໄມ້ ຈະຂະຫຍາຍການລົງທຶນນີ້ເພີ່ມຕື່ມອີກ: ການລົງທຶນຫວ່າງບໍ່ດົນມານີ້ ໃນໂຮງງານຜະລິດໄມ້ອັດ ແລະ ໂຮງງານຜະລິດແຜ່ນໄມ້ ເວີເນຍ (veneer) ມູນຄ່າ USD 15 – 20 ລ້ານໂດລາ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ເຍື່ອໄມ້ປະສົມ/ເຍື່ອໄມ້ຣີໄຊເຄິ້ນ/ເຈ້ຍແຂງຫຸ້ມຫໍ່ ມູນຄ່າ USD 1 ຕື້ໂດລາ ເຮັດໃຫ້ເຫັນໄດ້ເຖິງ ຕົວຊີ້ວັດຂອງລະດັບການລົງທຶນທີ່ເປັນໄປໄດ້ໃນປະຈຸບັນ ແລະ ອະນາຄົດ.

ພ້ອມນັ້ນ, ການລົງທຶນ ເພື່ອຈັດສັນເນື້ອທີ່ປູກຕົ້ນໄມ້ເສດຖະກິດ 200.000 ເຮັກຕາ ເປັນໄປໄດ້ສູງໃນການສົ່ງເສີມໃຫ້ເກີດການມີສ່ວນຮ່ວມກັນຂອງບັນດາເຈົ້າຂອງທີ່ດິນຂະໜາດນ້ອຍທີ່ມີທ່າແຮງ 70.000 ເຮັກຕາ, ແລະ ສ້າງວຽກເຮັດງານທຳແບບຖາວອນ ເຖິງ 9.000 ຄົນ ຊຶ່ງກ່ຽວຂ້ອງກັບການພັດທະນາທັກສະຄວາມຮູ້ ແລະ ຂີດຄວາມສາມາດຂອງອຸດສາຫະກຳນີ້.

ມີຫຼາຍອຸປະສັກຕໍ່ກັບການພັດທະນາການປູກຕົ້ນໄມ້ທີ່ມີປະສິດທິພາບ ແລະ ຂະແໜງປຸງແຕ່ງໄມ້ທີ່ກ່ຽວຂ້ອງ. ອຸປະສັກເຫຼົ່ານີ້ບາງບັນຫາ ກໍຮັບຮູ້ກັນດີ ແລະ ລວມທັງບັນຫາການຄອບຄອງທີ່ດິນ, ຂໍ້ຈຳກັດໃນການຄຸ້ມຄອງບໍລິຫານ ແລະ ການເຂົ້າເຖິງຕະຫຼາດ ແລະ ຈຸດສຸມເອົາໃຈໃສ່ຂອງລັດຖະບານ ສປປ ລາວ, ບັນດາຄູ່ຮ່ວມມືທີ່ໃຫ້ທຶນຊ່ວຍເຫຼືອ ແລະ ພາກເອກະຊົນ.

ການຜະລິດໄມ້ ແລະ ການປຸງແຕ່ງໄມ້ທີ່ກ່ຽວຂ້ອງກັບການຜະລິດ ເຮັດໃຫ້ເກີດຜົນປະໂຫຍດແກ່ຊີວິດການເປັນຢູ່ຢ່າງສຳຄັນຂອງເຈົ້າຂອງທີ່ດິນຂະໜາດນ້ອຍຂອງລາວ. ການຜະລິດໄມ້ ແລະ ຂະແໜງປຸງແຕ່ງໄມ້ທີ່ຍືນຍົງ ແລະ ມີປະສິດທິພາບ ໂດຍອີງໃສ່ ການປູກຕົ້ນໄມ້, ໄດ້ກໍ່ໃຫ້ເກີດຜົນປະໂຫຍດຫຼາຍດ້ານ ລວມເຖິງ ການພັດທະນາຊົນນະບົດ ແລະ ການລົບລ້າງຄວາມທຸກຍາກ, ແລະ ໂອກາດເຮັດໃຫ້ເກີດການປ່ຽນແປງຂອງສະພາບດິນຟ້າອາກາດໃຫ້ມີໜ້ອຍສຸດ. ໃນຂະນະທີ່ປ່າຕົ້ນໄມ້ປູກ ສາມາດສົ່ງເສີມຄວາມຫຼາກຫຼາຍທາງຊີວະນາພັນບາງດ້ານ ແລະ ຍັງຊ່ວຍຊຸກຍູ້ເພີ່ມຕື່ມເຂົ້າໃນປ່າທຳມະຊາດທີ່ມີການຄຸ້ມຄອງຈັດການແບບຍືນຍົງ ແລະ/ຫຼື ເຮັດໃຫ້ຫຼຸດຜ່ອນແຮງກົດດັນຕໍ່ກັບປ່າທຳມະຊາດທີ່ຍັງຄົງເຫຼືອຢູ່ນັ້ນ; ສະນັ້ນ, ຈຶ່ງເປັນການອະນຸລັກຊີວະນາພັນທີ່ອຸດົມສົມບູນທີ່ມີຢູ່ໃນປ່າທຳມະຊາດ.

ຂໍ້ສະເໜີແນະນຳ

ສະໜັບສະໜູນທາງດ້ານຄວາມຮູ້: ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄວາມຕ້ອງການໄມ້ອຸດສາຫະກຳ ແລະ ອຸດສາຫະກຳໄມ້ ຂອງໂລກ ແລະ ພາກພື້ນ ແມ່ນສຳຄັນຢ່າງຍິ່ງ ເພື່ອສະໜັບສະໜູນການພັດທະນາປູກໄມ້, ລວມເຖິງ ເຈົ້າຂອງທີ່ດິນຂະໜາດນ້ອຍ.

<u>ຂໍແນະນຳວ່າ</u> ຄວນສ້າງກົນໄກ ສຳລັບການທົບທວນຄືນທີ່ເປັນອິດສະຫຼະ ແລະ ການແບ່ງປັນຄວາມຮູ້ກ່ຽວກັບທ່າອ່ຽງຂອງພາກພື້ນ ແລະ ຂອງໂລກສຳລັບອຸດສາຫະກຳໄມ້ປູກ, ໂດຍມີກະຊວງການທີ່ກ່ຽວຂ້ອງ ແລະ ໜ່ວຍງານຂອງພາກລັດ, ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ, ຜູ້ໃຫ້ທຶນຊ່ວຍເຫຼືອ ແລະ ພາກເອກະຊົນ; ໂດຍການສະເໜີມອບບົດບາດ ສຳລັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI) ແລະ ກຸ່ມ ປ່າປູກຂອງລາວ.

<u>ຂໍແນະນຳວ່າ</u> ຄວນດຳເນີນການທຸກບາດກ້າວທີ່ເປັນໄປໄດ້ ໂດຍທຸກຂັ້ນຂອງລັດຖະບານ ແລະ ການຄ້າ ເພື່ອຮັບປະກັນວ່າ ສະພາບແວດລ້ອມໃນການລົງທຶນ ຂອງ ສປປ ລາວ ເຮັດໜ້າທີ່ຢ່າງມີປະສິດທິພາບ ແລະ ສາມາດຄາດການໄດ້.

ຂະແໜງປ່າໄມ້ ແລະ ການປູກໄມ້ເສດຖະກິດໃນ ສປປ ລາວ

ຄຳອະທິບາຍກ່ຽວກັບບັນຫາ

ໂດຍອີງໃສ່ດ້ານວັດທະນະທຳ, ການຍະພາບ ແລະ ເສດຖະກິດແລ້ວ, ປາຊາຊົນລາວ ຍັງຄົງມີການຕິດພັນຢ່າງສະໜິດແໜ້ນກັບປ່າໄມ້ທີ່ມີຄວາມຫຼາກຫຼາຍທາງຊີວະນາໆພັນຂອງພວກເຂົາ ຊຶ່ງສະໜອງໃຫ້ມີວັດຖຸທີ່ຫຼາກຫຼາຍ ແລະ ການບໍລິການ ນັບແຕ່ອາຫານ ແລະ ຢາພື້ນເມືອງ, ຝືນດັ່ງໄຟຄົວກົນ, ຊ່ວຍຫຼຸດຜ່ອນຄວາມສ່ຽງຈາກເຮັດກະສິກຳ, ການລ້ຽງຫົ້ນໃສ່ເຂື່ອນໄຟຟ້າພະລັງນ້ຳ ແລະ ໂຄງລ່າງພື້ນຖານ, ມີຄຸນຄ່າທາງດ້ານຈິດໃຈ, ໂອກາດສຳລັບການທ່ອງທ່ຽວແບບອະນຸລັກ ແລະ ການຈັດໃຫ້ມີໄມ້ ແລະ ເນື້ອໄມ້ເສດຖະກິດ. ໃນປີ 2015, ປ່າໄມ້ ກວມເອົາ ຫຼາຍກວ່າ 13 ລ້ານ ເຮັກຕາ ຊຶ່ງປະກອບດ້ວຍ 58% ຂອງເນື້ອທີ່ດິນ, ຊຶ່ງເປັນສັດສ່ວນທີ່ໃຫຍ່ສຸດຂອງປ່າໄມ້ທຳມະຊາດ ທີ່ກວມເອົາໃນພາກພື້ນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້. ເຖິງຢ່າງໃດກໍຕາມ, ເນື້ອທີ່ດັ່ງກ່າວ ໄດ້ຫຼຸດລົງໃນຫວ່າງຊຸມປີຜ່ານມາ ແລະ ສິ່ງນີ້ກ່ຽວຂ້ອງກັບ ການເຮັດໃຫ້ຄຸນນະພາບຂອງປ່າໄມ້ເສື່ອມໂຊມລົງ[14]. ເນື້ອທີ່ປ່າໄມ້ ປະກອບດ້ວຍ ສາມປະເພດປ່າໄມ້ທີ່ຈັດແບ່ງຢ່າງເປັນທາງການ ຄື: ປ່າສະຫງວນ, ປ່າຜະລິດ ແລະ ປ່າປົກປ້ອງ. ເນື້ອທີ່ປ່າໄມ້ເຫຼົ່ານີ້ ຖືກຄຸ້ມຄອງໂດຍ ກະຊວງ ກະສິກຳ ແລະ ປ່າໄມ້, ກົມປ່າໄມ້ ແລະ ມີເນື້ອທີ່ກວມເອົາ 70 ເປີເຊັນ ຂອງເນື້ອທີ່ດິນທັງໝົດຂອງ ສປປ ລາວ[15].

ປະມານ 67 ເປີເຊັນ ຂອງປະຊາກອນລາວ ແມ່ນອາໄສໃນເຂດຊົນນະບົດຫ່າງໄກສອກຫຼີກ ແລະ ຍັງຄົງດຳລົງຊີວິດແບບພໍລ້ຽງຊີບ ໂດຍເພິ່ງພາອາໄສປ່າໄມ້ ແລະ ຜະລິດຕະພັນຈາກປ່າໄມ້ ເພື່ອຕອບສະໜອງຄວາມຕ້ອງການພື້ນຖານ; ຜູ້ທຸກຍາກ ແມ່ນຈະໄດ້ຮັບຜົນກະທົບໄວໂດຍສະເພາະ ຈາກການສູນເສຍປ່າໄມ້ ເນື່ອງຈາກເຂົາເຈົ້າເພິ່ງພາອາໄສປ່າໄມ້ເປັນຫຼັກ. ເປັນທີ່ ຮັບຮູ້ແລ້ວວ່າ ປ່າໄມ້ມີຄວາມສຳຄັນລະດັບຊາດ, ການເພີ່ມຂຶ້ນຂອງເນື້ອທີ່ປ່າໄມ້ ກວມເອົາ 70% ແມ່ນຈຸດປະສົງທາງດ້ານນະໂຍບາຍແຫ່ງຊາດໃນປະຈຸບັນ.

ອຸດສາຫະກຳປ່າໄມ້ ໂດຍດັ້ງເດີມແລ້ວ ແມ່ນຖືກສ້າງຂຶ້ນບົນພື້ນຖານຄວາມອຸດົມສົມບູນຂອງຊັບພະຍາກອນໄມ້ພື້ນເມືອງ. ໄມ້ ແລະ ຜະລິດຕະພັນໄມ້ປຸງແຕ່ງ ມີບົດບາດສຳຄັນໃນເສດຖະກິດຂອງ ສປປ ລາວ. ໃນຊຸມປີ 1990, ໄມ້ ແລະ ຜະລິດຕະພັນໄມ້ ມີສ່ວນປະກອບໃນການສ້າງລາຍໄດ້ຈາກສິ່ງອອກເຖິງ 40 ເປີເຊັນ[16], ເກືອບວ່າ ເຄິ່ງໜຶ່ງ ແມ່ນການສົ່ງອອກໄມ້ທ່ອນຈາກປ່າເຂດຮ້ອນທີ່ເປັນໄມ້ເນື້ອແຂງ ໄປຍັງປະເທດໃກ້ຄຽງ. ສ່ວນຫຼວງຫຼາຍບໍ່ປະກົດເຫັນໃນສະຖິຕິການຄ້າ. ເຈົ້າໜ້າທີ່ ກັງວົນກ່ຽວກັບ ການສົ່ງອອກໄມ້ທ່ອນທີ່ມີມູນຄ່າຕ່ຳ ແລະ ການຕັດໄມ້ທຳລາຍປ່າໄມ້ທີ່ເປັນຊັບພະຍາກອນອັນມີຄ່າຂອງປະເທດ ຈຶ່ງເຮັດໃຫ້ເກີດການຫ້າມສົ່ງອອກໄມ້ທ່ອນໃນປີ 2001 ແລະ ຕໍ່ມາ ກໍມີການຫ້າມສົ່ງອອກໄມ້ທີ່ຍັງບໍ່ແປຮູບໃນປີ 2016 ຊຶ່ງເຮັດໃຫ້ເກີດການປ່ຽນແປງດັດປັບທາງດ້ານໂຄງສ້າງຂອງຂະແໜງນີ້.

ການຮັບຮູ້ເຖິງ ທ່າແຮງຂອງການປູກໄມ້ ເພື່ອປະກອບສ່ວນເຂົ້າໃນເສດຖະກິດແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນໃນຊົນນະບົດຫ່າງໄກສອກຫຼີກ, ນະໂຍບາຍ ເພື່ອສົ່ງເສີມການປູກໄມ້ ຖືກນຳສະເໜີໃນ ຊຸມປີ 1990. ການຕອບຮັບຂອງພາກເອກະຊົນ ແລະ ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ຊຶ່ງເປັນການຮ່ວມມືລະຫວ່າງ ລາວ ກັບ ສະວິເດັນ ໄດ້ເລີ່ມຕົ້ນປູກຕົ້ນໄມ້ ແລະ ສົ່ງເສີມການມີສ່ວນຮ່ວມຂອງເຈົ້າຂອງທີ່ດິນຂະໜາດນ້ອຍ ໃນປີ 1990, ໂດຍມີວິໄສທັດ ເພື່ອສ້າງອຸດສາຫະກຳປຸງແຕ່ງໄມ້ ໂດຍນຳໃຊ້ໄມ້ປູກຈາກປ່າຜະລິດ. ນັບແຕ່ປີ 1994 - 2001, ລັດຖະບານ ແຫ່ງ ສປປ ລາວ ໄດ້ຄຸ້ມຄອງຈັດການ ໂຄງການປູກຕົ້ນໄມ້ອຸດສາຫະກຳ ໂດຍໃຫ້ການສະໜັບສະໜູນທາງດ້ານເງິນທຶນຈາກທະນາຄານພັດທະນາອາຊີ (ADB) ໂດຍມີຈຸດປະສົງ ເພື່ອ “ສ້າງເນື້ອທີ່ປ່າຄືນໃໝ່ ເພື່ອກວມເອົາເນື້ອທີ່ປ່າໄມ້ທີ່ເສື່ອມໂຊມ ແລະ ປ່າດົງ, ສ້າງວັດຖຸດິບທີ່ເປັນໄມ້ ເພື່ອການນຳໃຊ້ໃນອຸດສາຫະກຳ, ແລະ ສ້າງນະໂຍບາຍ ແລະ ຂອບວຽກທາງດ້ານສະຖາບັນການຈັດຕັ້ງ ເພື່ອພັດທະນາການປູກຕົ້ນໄມ້ແບບຍືນຍົງ”. ເນື້ອທີ່ຂອງປ່າຜະລິດ ປະມານ 8.000 ເຮັກຕາ ໄດ້ຖືກສ້າງຂຶ້ນ ແລະ ໃນປີ 2001, ການຂະຫຍາຍທຶນສະໜັບສະໜູນຈາກທະນາຄານພັດທະນາອາຊີ ເພີ່ມຕື່ມ ໃຫ້ແກ່ກິດຈະກຳ “ເພື່ອກະກຽມ ໂຄງການລ້ຽງທຶນທີ່ຈະຊ່ວຍປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ອາໄສຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ ໂດຍຜ່ານການປູກຕົ້ນໄມ້” ແລະ “ການປູກຕົ້ນໄມ້ ຈະປ່ຽນແທນເນື້ອທີ່ດິນປ່າໄມ້ທີ່ເສື່ອມໂຊມ, ແລະ ຫ້າມແຕະຕ້ອງປ່າໄມ້ພື້ນຖານ ຫຼື ເປີດເຮັດເປັນເສັ້ນທາງສັນຈອນ”[17]. ທະນາຄານພັດທະນາອາຊີ ສືບຕໍ່ສົນໃຈໃນຂະແໜງປ່າຜະລິດ ຕາມຂໍ້ສະເໜີໃນປີ 2005 ເພື່ອສ້າງຕັ້ງອຳນາດການປົກຄອງປູກປ່າຜະລິດ ຊຶ່ງຈະ “ຊ່ວຍອຳນວຍຄວາມສະດວກໃນການສ້າງຊັບພະຍາກອນໄມ້ປູກຢ່າງຫຼວງຫຼາຍ ເພື່ອສະໜອງໃຫ້ແກ່ຜະລິດຕະພັນໄມ້ ແລະ ຜະລິດຕະພັນອື່ນໆທີ່ບໍ່ແມ່ນໄມ້, ການປົກປັກຮັກສາ ເພື່ອຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານ ສຳລັບການພັດທະນາການປູກຕົ້ນໄມ້ໃນ ສປປ ລາວ ແລະ ການເຮັດໃຫ້ປ່າທຳມະຊາດທີ່ເສື່ອມໂຊມນັ້ນກັບສູ່ສະພາບເດີມ, ແລະ ຫຼຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດຫ່າງໄກສອກຫຼີກ ໂດຍການສ້າງ ຊັບພະຍາກອນໄມ້ປູກຢ່າງຫຼວງຫຼາຍ ເພື່ອສະໜອງຜະລິດຕະພັນໄມ້, ເພື່ອສ້າງລາຍຮັບເງິນຕາຕ່າງປະເທດຜ່ານການສົ່ງອອກ[18]. “ລັດຖະບານຈະໄດ້ດຳເນີນການສືບຕໍ່ໃນແນວຄິດລິເລີ່ມນີ້.

---

[14] ທະນາຄານໂລກ (2019). ການເປັນຄູ່ຮ່ວມ ແລະ ໂອກາດ ສຳລັບເສດຖະກິດປ່າສີຂຽວແບບໃໝ່ ໃນ ສປປ ລາວ: ການສ້າງຄວາມຍືນຍົງໃຫ້ແກ່ລັກສະນະພູມີປະເທດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. 88p. ເບິ່ງທີ່: http://documents.worldbank.org/curated/en/706711560546421547/pdf/Partnerships-and-Opportunities-for-a- New-Green-Forest-Economy-in-Lao-PDR-SustainingForest-Landscapes-and-Livelihoods.pdf

[15] ທະນາຄານໂລກ (2019). ເອກະສານຂໍ້ມູນໂຄງການ (PID). ໂຄງການລັກສະນະພູມີປະເທດ ແລະ ຊີວິດການເປັນຢູ່ຂອງ ລາວ (P170559) 8p.

[16] ສຸຊາດ ໄຊຍະກຸມມານ ແລະ ວົງໄຊ ມະນີວົງ (2007). ຜົນກະທົບທາງດ້ານສິ່ງແວດລ້ອມຈາກການເປີດເສລີທາງດ້ານການຄ້າໃນ ຂະແໜງໄມ້ ແລະ ຜະລິດຕະພັນໄມ້, ສປປ ລາວ. ໂຄງການ ການປະເມີນດ້ານສິ່ງແວດລ້ອມ ແລະ ການຂະຫຍາຍຕົວຂອງການຄ້າ, ຂໍ້ມູນພື້ນຖານບົດຄົ້ນຄວ້າວິໄຈ. ສະຖາບັນສາກົນດ້ານການພັດທະນາທີ່ຍືນຍົງ (IISD). 15 p.ເບິ່ງທີ່: https://www.iisd.org/pdf/2008/rtea_lao_wood.pdf

[17] ການຊ່ວຍເຫຼືອທາງດ້ານວິຊາການໃຫ້ແກ່ ສປປ ລາວ ໃນການກະກຽມ ໂຄງການການປູກຕົ້ນໄມ້ ເພື່ອການດຳລົງຊີວິດຂອງປະຊາຊົນ (LAO 31344), ໄດ້ຮັບເງິນທຶນສະໜັບສະໜູນຈາກກອງທຶນພິເສດຂອງຍີ່ປຸ່ນ.

ການລິເລີ່ມເຫຼົ່ານີ້ ໄດ້ຮັບການສະໜັບສະໜຸນຜ່ານຂອບວຽກທາງດ້ານນິຕິກຳ ແລະ ລະບຽບການຂອງຝ່າຍບໍລິຫານ. ຄຽງຄູ່ກັນນັ້ນ, ກົດໝາຍ ວ່າດ້ວຍ ປ່າໄມ້ ແລະ ດຳລັດເລກທີ 96/ນຍ ກ່ຽວກັບ ການສົ່ງເສີມ ແລະ ການລົງທຶນການປູກຕົ້ນໄມ້, ຂໍ້ຕົກລົງຂອງກະຊວງ ກະສິກຳ-ປ່າໄມ້ ເລກທີ 196/2000 ກ່ຽວກັບ ການພັດທະນາການປູກຕົ້ນໄມ້, ແລະ ເລກທີ 1849/2000 ກ່ຽວກັບການຈົດທະບຽນຕົ້ນໄມ້ປູກ ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີປະຈຳປີ ຊຶ່ງຄຸ້ມຄອງກິດຈະກຳປ່າໄມ້ ໄດ້ຈັດໃຫ້ມີ ການສະໜັບສະໜຸນທີ່ສຳຄັນ ເພື່ອການປູກຕົ້ນໄມ້.

ໃນປີ 2005, ລັດຖະບານໄດ້ຮັບຮອງເອົາ “ຍຸດທະສາດປ່າໄມ້ຮອດປີ 2020”, ຊຶ່ງໄດ້ກຳນົດເປົ້າໝາຍປູກຕົ້ນໄມ້ໃຫ້ໄດ້ເນື້ອທີ່ 500.000 ເຮັກຕາ ພາຍໃນປີ 2020. ໃນປີ 2012, ໂດຍຕອບສະໜອງກັບບັນຫາຄວາມສະເໝີພາບຂອງຊຸມຊົນທີ່ອາໄສຢູ່ອ້ອມຮອບເຂດປ່າໄມ້, ລັດຖະບານໄດ້ອອກຄຳສັ່ງນາຍົກລັດຖະມົນຕີເລກທີ 13 (PMO13) ຊຶ່ງຈຳກັດການສຳປະທານສຳລັບການປູກປ່າໃໝ່ ລວມທັງ ປູກຢາງພາລາ, ເຖິງຢ່າງໃດກໍຕາມ, ໃນປີ 2018, ບັນຫານີ້ ໄດ້ຖືກດັດປັບ ເພື່ອຊຸກຍູ້ໃຫ້ປູກຕົ້ນອີກ ແລະ ຕົ້ນ ກະຖິນ ໂດຍຜ່ານຄຳສັ່ງນາຍົກລັດຖະມົນຕີເລກທີ 09 (PM09) ແລະ ຄຳສັ່ງແນະນຳທີ່ກ່ຽວຂ້ອງເລກທີ 1758/ກປ ກ່ຽວກັບ “ການຄຸ້ມຄອງຈັດການການນຳໃຊ້ທີ່ດິນທີ່ມີນະໂຍບາຍຈູງໃຈສຳລັບ ການສຳປະທານການປູກຕົ້ນໄມ້ອຸດສາຫະກຳ ແລະ ຕົ້ນໄມ້ ອື່ນໆທົ່ວປະເທດ”. ພ້ອມນັ້ນ, ໃນປີ 2019 ດຳລັດນາຍົກລັດຖະມົນຕີ ເລກທີ 247/ ນຍ ກ່ຽວກັບ “ການສົ່ງເສີມການປູກຕົ້ນໄມ້ເພື່ອເປັນສິນຄ້າ” ຈັດໃຫ້ມີແຮງຊຸກຍູ້ໃໝ່ໃນການພັດທະນາການປູກຕົ້ນໄມ້ທັງຂອງບັນດາບໍລິສັດ ແລະ ເຈົ້າຂອງທີ່ດິນຂະໜາດນ້ອຍ.

ຂະແໜງປ່າຜະລິດທີ່ຂະຫຍາຍຕົວ ປະກອບກັບ ອຸດສາຫະກຳປຸງແຕ່ງທີ່ທັນສະໄໝ ແມ່ນສອດຄ່ອງກັບ ຈຸດມຸ່ງໝາຍແຫ່ງຊາດ ແລະ ເປົ້າໝາຍ ການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ (SDG), ໂດຍສະເພາະ SDG 9, ສ້າງໂຄງລ່າງພື້ນຖານກັບຄືນສູ່ສະພາບເດີມໄດ້, ສົ່ງເສີມການຫັນເປັນອຸດສາຫະກຳທີ່ມີສ່ວນຮ່ວມ ແລະ ຍືນຍົງ ແລະ ສົ່ງເສີມນະວັດຕະກຳ.

ເນື້ອທີ່ປ່າຜະລິດຫຼາຍກວ່າ 478.600 ເຮັກຕາ, ຕົ້ນຕໍ ແມ່ນປູກຢາງພາລາ, ປະຈຸບັນ ແມ່ນໄດ້ເກີດມີຂຶ້ນໃນ ສປປ ລາວ ໂດຍມີວິສາຫະກິດ ເອກະຊົນເອງ ຫຼື ພ້ອມກັບ ຜູ້ປູກພາຍນອກທີ່ເປັນເຈົ້າຂອງທີ່ດິນ 67 ເປີເຊັນ, ເຈົ້າຂອງທີ່ດິນຂະໜາດນ້ອຍ ເປັນເຈົ້າຂອງເກືອບ 33 ເປີເຊັນ, ແລະ ຂອງລັດ ແມ່ນ 0.3 ເປີເຊັນ. ຄາດວ່າ ເນື້ອທີ່ຕົວຈິງຂອງການປູກຕົ້ນອີກ ແລະ ຕົ້ນ ກະຖິນ ທີ່ເປັນພືດເສດຖະກິດ ແມ່ນມີພຽງແຕ່ ປະມານ 52.000 ເຮັກຕາ[19].

ໂດຍສອດຄ່ອງກັບການປັບປຸງສະພາບແວດລ້ອມໃນການລົງທຶນໃນ ສປປ ລາວ, ການລົງທຶນປຸງແຕ່ງໄມ້ ບົນພື້ນຖານປ່າຜະລິດ ໄດ້ເພີ່ມຂຶ້ນ ແລະ ຕົວຢ່າງຫວ່າງບໍ່ດົນມານີ້ ລວມມີ:

- ບໍລິສັດ ຊັນ ເປເປີ – ລົງທຶນ USD 500 ລ້ານໂດລາ ໃນໂຮງງານປຸງແຕ່ງເນື້ອເຍື່ອໄມ້ເພື່ອຜະລິດເຈ້ຍ ທີ່ ເມືອງເຊໂປນ[20];
- ບໍລິສັດ ບົວລະພາ – ລົງທຶນ USD15 ລ້ານໂດລາ ໃນໂຮງງານ ໄມ້ອັດ/ເວີເນຍ ທີ່ເມືອງຫີນເຫີບ; ແລະ
- ການປູກຕົ້ນສັກແມ່ຂອງ ພວມພິຈາລະນາການລົງທຶນ USD12 ລ້ານໂດລາ ໃນການປຸງແຕ່ງໄມ້ ເວີເນຍ.

ເນື້ອທີ່ດິນ 650.000 ເຮັກຕາ ທີ່ມີສະພາບເສື່ອມໂຊມແຮງ ພາຍໃນເຂດປ່າຜະລິດ (PFAs) ຫວ່າງບໍ່ດົນມານີ້ ໄດ້ມີການລະບຸ ວ່າ ເປັນເຂດ ທີ່ມີທ່າແຮງອັນເໝາະສົມ ເພື່ອລົງທຶນໃນການປູກປ່າຜະລິດ. ລັດຖະບານ ຮັບຮູ້ວ່າ ການເປັນຄູ່ຮ່ວມມືລະຫວ່າງ ພາກລັດ-ເອກະຊົນ-ປະຊາຊົນ (PPPPs) ໄດ້ໃຫ້ໂອກາດທາງແກ້ໄຂບັນຫາທີ່ເປັນທ່າແຮງ ເພື່ອຟື້ນຟູສະພາບປ່າ ແລະ ຟື້ນຟູເຂດເຫຼົ່ານີ້. ເນື້ອທີ່ດິນເຫຼົ່ານີ້ ແລະ ເນື້ອທີ່ ນອກຈາກປະເພດປ່າທາງການຂອງລັດຖະບານ ສ້າງພື້ນຖານທາງດ້ານທີ່ດິນ ເພື່ອການສ້າງປ່າຜະລິດທີ່ເປັນໄປໄດ້.

ການລົງທຶນປູກຕົ້ນໄມ້ ຂອງບັນດາບໍລິສັດ ປະເຊີນກັບບັນຫາທາງດ້ານເຕັກນິກ ແລະ ບັນຫາສະຖາບັນການຈັດຕັ້ງ, ໂດຍສະເພາະ ແມ່ນຂັ້ນ ຕອນທີ່ບ່ຈະແຈ້ງຂອງລັດຖະບານ ເພື່ອຄຸ້ມຄອງບໍລິຫານຕາມຄຳຮ້ອງຂໍ, ການຄຸ້ມຄອງກິດຈະກຳຕ່າງໆ, ແລະ ການລະບຸ ຫຼື ກຳນົດເນື້ອທີ່ດິນທີ່ ເໝາະສົມ. ການແຂ່ງຂັນ ສຳລັບ ເນື້ອທີ່ດິນ ຊຶ່ງປູກພືດກະສິກຳທີ່ມີມູນຄ່າສູງ ຍັງຄົງເປັນບັນຫາ. ພາຍຫຼັງການລິເລີ່ມຢ່າງໄວວາ, ການຂະຫຍາຍ ການປູກຕົ້ນໄມ້ຂອງເຈົ້າຂອງທີ່ດິນຂະໜາດນ້ອຍ ໄດ້ຢຸດຊະງັກ, ຕົ້ນຕໍ ຍ້ອນວ່າ ຄວາມບໍ່ແນ່ນອນຂອງຕະຫຼາດ, ແລະ ຜະລິດຕະພາບ ແລະ ຄຸນນະພາບບໍ່ໄດ້ຕາມມາດຕະຖານ.

ຜົນກະທົບຕໍ່ ສປປ ລາວ

ຄວາມຄາດຫວັງຈາກການຂະຫຍາຍການລົງທຶນໃນການປູກຕົ້ນໄມ້, ໂດຍການຄຸ້ມຄອງຈັດການແບບຍືນຍົງ ສຳລັບ ຜົນກະທົບທາງບວກຕໍ່ ສັງຄົມ, ສິ່ງແວດລ້ອມ ແລະ ຜົນໄດ້ຮັບທາງເສດຖະກິດ ລວມມີ:

- ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນຊົນນະບົດຫ່າງໄກສອກຫຼີກ ແລະ ສົ່ງເສີມໂອກາດໃນການມີວຽກເຮັດງານທຳຂອງ ປະຊາຊົນ;

[18] ADB (2005). ປະສົບການ ຈາກໂຄງການປູກຕົ້ນໄມ້ອຸດສາຫະກຳ ແລະ ອະນາຄົດຂອງການປູກປ່າໄມ້ໃນ ສປປ ລາວ. ກອງປະຊຸມວິຊາການ ເພື່ອປະເມີນໂຄງການການ ພັດທະນາການປູກປ່າໄມ້, ວັນທີ 4 ຕຸລາ 2005

[19] Stuart Ling, Hilary Smith, Stephen Midgley, Keith Barney and Peter Kanowski (2020). ການປະເມີນຕ່ອງໂສ້ມູນຄ່າ: ບົດລາຍງານການສະຫຼຸບ ການສະໄໝ – ການປູກຕົ້ນອີກໃນ ສປປ ລາວ ຈາກມຸມມອງຂອງເຈົ້າຂອງທີ່ດິນຂະໜາດນ້ອຍ. ຮ່າງ. ໂຄງການ ACIAR FST/2016/151: ການສ້າງຄວາມກ້າວໜ້າໃຫ້ແກ່ ອຸດສາຫະກຳການປຸງແຕ່ງໄມ້ທີ່ສົ່ງເສີມໃນ ສປປ ລາວ ແລະ ປະເທດອົດສະຕຣາລີ.

[20]ໂຮງງານສີເນື້ອເຍື່ອໄມ້ ຊັນເປເປີ ທີ່ ເມືອງເຊໂປນ ຖືກອອກແບບເພື່ອຜະລິດທັງ ເຈ້ຍແຂງ (BHKP) ແລະ ເຈ້ຍຈາກເນື້ອເຍື່ອໄມ້ລະລາຍ (DP)

- ຜະລິດຕະພາບທາງດ້ານເສດຖະກິດທີ່ສູງກວ່າຈາກເນື້ອທີ່ດິນທີ່ຍັງບໍ່ໄດ້ນຳເປີດນຳໃຊ້ຢ່າງເຕັມສ່ວນ;
- ການພັດທະນາທັກສະຄວາມຮູ້ ແລະ ເພີ່ມຂີດຄວາມສາມາດທາງດ້ານອຸດສາຫະກຳ;
- ປະກອບສ່ວນເຂົ້າໃນການສົ່ງເສີມເນື້ອທີ່ປູກປ່າເພີ່ມຂຶ້ນ;
- ເພີ່ມການລົງທຶນໂດຍກົງຈາກຕ່າງປະເທດ; ແລະ
- ເພີ່ມລາຍຮັບຈາກການສົ່ງອອກ.

ເຖິງແມ່ນວ່າ ເນື້ອທີ່ດິນຊຶ່ງລະບຸເປັນດິນທີ່ຍັງບໍ່ໄດ້ໃຊ້ງານຢ່າງເຕັມສ່ວນ ແລະ ເໝາະສົມໃນການປູກຕົ້ນໄມ້ເສດຖະກິດ, ບັນຫາທ້າທາຍທີ່ສຳຄັນ ຕໍ່ກັບການສ້າງປ່າຜະລິດທີ່ຄຸ້ມຄອງແບບຍືນຍົງນັ້ນ ຍັງຄົງເປັນບັນຫາຂອງການເຂົ້າເຖິງທີ່ດິນ, ບໍ່ວ່າ ຈະໂດຍ ບັນດາບໍລິສັດ (ທັງພາຍໃນ ແລະ ຕ່າງ ປະເທດ ລວມເຖິງ ບໍລິສັດຮ່ວມທຶນ) ຫຼື ປະຊາຊົນໃນທ້ອງຖິ່ນ ໃນຖານະຊຸມຊົນ ຫຼື ບຸກຄົນ ກໍຕາມ.
ຈາກປະສົບການຜ່ານມາກັບ ການຂະຫຍາຍຕົວຢ່າງໄວວາຂອງການປູກຕົ້ນໄມ້ຢ່າງພາລາໃນ ສປປ ລາວ ສະແດງໃຫ້ເຫັນວ່າ ການພັດທະນາຂະແໜງ ປ່າຜະລິດ ອາດຈະບໍ່ເຮັດໃຫ້ເກີດຜົນປະໂຫຍດຕໍ່ຊຸມຊົນໃນວົງກວ້າງ ແລະ ບັນຫາຕ່າງໆເຊັ່ນ ການຊຶດເຊີຍການສູນເສຍເນື້ອທີ່ດິນ, ການເຮັດໃຫ້ມີ ວຽກເຮັດງານທຳຢ່າງແທ້ຈິງ ແລະ ການຄຸ້ມຄອງສິ່ງແວດລ້ອມທີ່ສົ່ງຜົນກະທົບໄວ ຍັງຄົງເປັນບັນຫາສຳຄັນໃນການພິຈາລະນາ. ບັນຫາຄວາມຍືນຍົງ ດ້ານສັງຄົມ ແລະ ສິ່ງແວດລ້ອມ ຍັງຄົງເປັນເສົາຄ້ຳ ສຳລັບ ຄວາມຍືນຍົງທາງດ້ານການເງິນຂອງການລົງທຶນ.
ປະເພດພັນໄມ້ວິກ ແລະ ໄມ້ກະຖິນ (ອາຊາເຊຍ) ແລະ ພັນປະສົມ (ໄຮບຣິດ) ທີ່ນິຍົມປູກໃນປ່າຜະລິດ ແມ່ນເຕີບໃຫຍ່ໄດ້ດີໃນ ສະພາບດິນຟ້າ ອາກາດຂອງ ສປປ ລາວ, ໃນຂະນະທີ່ ຂະແໜງນີ້ ສາມາດສ້າງປະສົບການພາຍໃນປະເທດ[21] [22] ໄດ້ເຖິງ 50 ປີ ແລະ ປະສົບການທີ່ຍາວນານ ແລະ ຜົນສຳເລັດຈາກບັນດາປະເທດໃກ້ຄຽງ. ແນວທາງສຳລັບການຄຸ້ມຄອງການປູກຕົ້ນໄມ້ ຊຶ່ງຍົກສູງຜະລິດຕະພາບ ແລະ ຮັກສາຄຸນນະພາບຂອງດິນ ໄດ້ຖືກພັດທະນາຂຶ້ນ ແລະ ມີໄວ້ສຳລັບ ສປປ ລາວ[23].

ຫຼາຍບົດສຶກສາຫວ່າງບໍ່ດົນມານີ້[24] ສະຫຼຸບວ່າ ຜົນກະທົບທີ່ເປັນໄປໄດ້ຂອງການປ່ຽນແປງສະພາບດິນຟ້າອາກາດ ຕໍ່ກັບ ພັນໄມ້ວິກທີ່ນິຍົມປູກ ແລະ ພັນປະສົມພາຍໃນພາກພື້ນ ມີຄວາມເປັນໄປໄດ້ຕ່ຳ. ຜູ້ຈັດການ ຂອງການປູກຕົ້ນໄມ້ວິກໃນພາກພື້ນ ຈະມີລະດັບຂີດຄວາມສາມາດໃນການປັບ ຕົວສູງ, ເນື່ອງຈາກວ່າ ການປູກຕົ້ນໄມ້ຂອງພວກເຂົາ ແມ່ນມັກໃຫຍ່ໄວໃນຮອບໝຸນວຽນທີ່ສັ້ນໄລຍະ ຫົກ ຫາ ແປດປີ, ຫຼື ນ້ອຍກວ່ານັ້ນ. ຖ້າ ຫາກ ການປ່ຽນແປງສະພາບດິນຟ້າອາກາດ ເຮັດໃຫ້ເກີດບັນຫາ, ມັນຂ້ອນຂ້າງໄວ ແລະ ງ່າຍໃນການປ່ຽນແປງປະເພດພັນໄມ້ທີ່ປູກໄປເປັນ ພັນທີ່ ເໝາະສົມກວ່າສຳລັບບ່ອນທີ່ມີອຸນຫະພູມທີ່ສູງຂຶ້ນ.
ມີຄວາມຄາດຫວັງຂອງຄົນລາວຄືວ່າ ນອກເໜືອຈາກການຈ້າງງານແລ້ວ, ຂະແໜງປູກຕົ້ນໄມ້ທັນສະໄໝ ຈະພັດທະນາ ທັກສະຄວາມຮູ້ໃໝ່ ເພື່ອ ຕອບສະໜອງກັບຄວາມຕ້ອງການສຳລັບການເພາະຊຳ, ການປູກ ແລະ ການຄຸ້ມຄອງການຕັດໄມ້ ແລະ ຕົ້ງລາກຕົ້ນໄມ້, ແລະ ສ້າງທັກສະຄວາມຮູ້ ແລະ ຂີດຄວາມສາມາດໃນການປຸງແຕ່ງອຸດສາຫະກຳທີ່ທັນສະໄໝ. ບັນດາບໍລິສັດ ລາຍງານໃຫ້ເຫັນເຖິງ ຄວາມຫຍຸ້ງຍາກໃນການຊອກຫາຄົນທີ່ ມີຄຸນນະວຸດສຳລັບໜ້າວຽກທີ່ຕ້ອງການທັກສະຄວາມຮູ້ຂັ້ນສູງ. ການຂະຫຍາຍການປູກຕົ້ນໄມ້ ແລະ ຂະແໜງປຸງແຕ່ງໄມ້ ຈະຮຽກຮ້ອງຕ້ອງການ ໃຫ້ມີການພັດທະນາທັກສະຄວາມຮູ້ໃນລະດັບມືອາຊີບ ແລະ ລະດັບວິຊາຊີບ ແລະ ທັກສະຄວາມຮູ້ດ້ານການຄຸ້ມຄອງຈັດການທຸລະກິດທີ່ກ່ຽວຂ້ອງ.

ຂໍ້ສະເໜີແນະນຳ

ໂອກາດໃນການສ້າງອຸດສາຫະກຳປ່າໄມ້ປູກທີ່ທັນສະໄໝ ໃນ ສປປ ລາວ ແລະ ຜົນປະໂຫຍດ ແລະ ບັນຫາທ້າທາຍທີ່ເກີດຂຶ້ນ ຍັງບໍ່ທັນໄດ້ຮັບຮູ້ ພາຍໃນຊຸມຊົນຄົນລາວຢ່າງກວ້າງຂວາງ.

ຂໍແນະນຳວ່າ ຄວນເລີ່ມຕົ້ນສ້າງແຜນງານການສື່ສານໃນທາງບວກ ຊຶ່ງຈະແບ່ງປັນຄວາມຮັບຮູ້ກ່ຽວກັບຜົນກະທົບທີ່ຄາດວ່າຈະເກີດຂຶ້ນ ກັບ:

- ການພັດທະນາທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທັງດ້ານປະລິມານ ແລະ ຄຸນນະພາບ ເທົ່າທີ່ຈະເປັນໄປໄດ້.
- ຫຼາກຫຼາຍກຸ່ມທີ່ມີສ່ວນກ່ຽວຂ້ອງ ໂດຍສະເພາະ ປະຊາຊົນໃນທ້ອງຖິ່ນ.

ຂໍແນະນຳວ່າ ຄວນພະຍາຍາມຢ່າງຈິງຈັງ ເພື່ອແບ່ງປັນເລື່ອງເລົ່າກ່ຽວກັບປ່າປູກໃນທາງບວກຢ່າງກວ້າງຂວາງໃນ ສປປ ລາວ, ຜ່ານ ໂຮງຮຽນ, ໂທລະພາບ, ວິທະຍຸ, ສື່ສັງຄົມອອນລາຍ ແລະ ການນຳສະເໜີໃຫ້ແກ່ບຸກຄົນທີ່ສົນໃຈ ແລະ ປະຊາຊົນທີ່ມີອິດທິພົນໃນການ ສະໜັບສະໜູນ.

ສິ່ງສຳຄັນ ແມ່ນວ່າ ການສ້າງຄວາມດຸ່ນດ່ຽງທາງດ້ານຜົນປະໂຫຍດຂອງບັນດາຜູ້ມີສ່ວນກ່ຽວຂ້ອງ ສະແດງໃຫ້ເຫັນ ເຖິງຕ່ອງໂສ້ມູນຄ່າທັງໝົດ ຈາກການເພາະປູກ ໂດຍຜ່ານອຸດສາຫະກຳປ່າໄມ້ປູກ ແລະ ໄປຍັງຕະຫຼາດ, ຊຶ່ງຈະຮຽກຮ້ອງໃຫ້ມີການປະສານງານກັບບັນດາໜ່ວຍງານຂອງ ລັດຖະບານ ແລະ ສາທາລະນະຊົນ ກ່ຽວກັບການພັດທະນານະໂຍບາຍ ແລະ ສະຖາບັນການຈັດຕັ້ງ, ຊຶ່ງຊ່ວຍຊຸກຍູ້ໃຫ້ເກີດການຍອມຮັບຂອງ ສາທາລະນະຊົນທົ່ວໄປ.

[21] Midgley, S. J. (2006). ການພັດທະນາຂະແໜງປ່າຜະລິດໃນ ສປປ ລາວ. ເອກະສານ ການກຳນົດຈຸດຍືນທາງການຕະຫຼາດສຳລັບ ໂຄງການສົ່ງເສີມການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020 (FSIP), ກົມປ່າໄມ້, ສປປ ລາວ. 119pp.
[22] Phimmavong, S., Ozarska, B., Midgley, S., and Keenan, R. (2009). ການພັດທະນາປ່າ ແລະ ການປູກຕົ້ນໄມ້ໃນ ສປປ ລາວ: ປະຫວັດຜ່ານມາ, ການ ພັດທະນາ ແລະ ຜົນກະທົບຕໍ່ກັບບັນດາຊຸມຊົນໃນຊົນນະບົດຫ່າງໄກສອກຫຼີກ. ການທົບທວນຄືນ ປ່າໄມ້ສາກົນ, 11(4), 501-513.
[23] Nambiar EKS, Harwood CE. 2014. ຜະລິດຕະພາບຂອງການປູກຕົ້ນວິກ ແລະ ຕົ້ນ ອາຊາເຊຍ ໃນອາຊີຕາເວັນອອກສ່ຽງໃຕ້. 1. ຕົວກຳນົດດ້ານກາຍະ-ຊີວະພາບ ກ່ຽວກັບໂອກາດ ແລະ ບັນຫາທ້າທາຍຂອງການຜະລິດ. ບົດທົບທວນຄືນປ່າໄມ້ສາກົນ, ສະບັບທີ16(2), 225-248
[24] Midgley, S. J. (2019). ໂອກາດສຳລັບການປູກຕົ້ນວິກໃນພາກເໜືອຂອງ ສປປ ລາວ. ບົດລາຍງານລູກຄ້າ ໃຫ້ແກ່ ມະຫາວິທະຍາໄລ ຄວີນແລນ ຊຶ່ງເປັນສ່ວນໜຶ່ງຂອງ ໂຄງການ ACIAR FST/2012/041 ລະບົບກະສິກຳ-ປ່າໄມ້ສົກເປັນ

ໂອກາດສຳລັບການຂະຫຍາຍການປູກຕົ້ນໄມ້

ຄຳອະທິບາຍກ່ຽວກັບບັນຫາ

ການລົງທຶນໃນການປູກຕົ້ນໄມ້ທີ່ມີການຄຸ້ມຄອງຈັດການແບບຍືນຍົງ ນັ້ນ ສະແດງໃຫ້ເຫັນເຖິງ ໂອກາດຕ່າງໆທີ່ເປັນໄປໄດ້ສູງສຳລັບນັກລົງທຶນ[25] ແລະ ປະກອບສ່ວນເຂົ້າໃນເປົ້າໝາຍການພັດທະນາແຫ່ງຊາດຫຼາຍດ້ານໃນ ສປປ ລາວ. ໃນທົ່ວໂລກແລ້ວ ເຫັນວ່າ ການລົງທຶນໃສ່ທາງດ້ານສະຖາບັນການຈັດຕັ້ງ ໃນເນື້ອທີ່ດິນປູກຕົ້ນໄມ້ ແມ່ນເພີ່ມຂຶ້ນ ແລະ ນັກລົງທຶນ ກຳຊອກຫາ ໂອກາດ ໃໝ່ໆທີ່ພວມເກີດຂຶ້ນ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການປ່ຽນແປງສະພາບເງື່ອນໄຂຂອງຕະຫຼາດ ແລະ ການແຂ່ງຂັນທີ່ເກີດຂຶ້ນຢ່າງຕໍ່ເນື່ອງ. ການລົງທຶນໃສ່ການປູກຕົ້ນໄມ້ ເຮັດໃຫ້ມີໂອກາດສຳລັບນັກລົງທຶນ ທີ່ພວມຊອກຫາຄຸນຄ່າທາງດ້ານການຜະລິດ ແລະ ການອະນຸລັກ ເພື່ອສະເໜີແຫຼ່ງຜົນຕອບແທນຕໍ່ເງິນທຶນທີ່ຍືນຍົງ ແລະ ເຊື່ອຖືໄດ້, ແຕ່ຮຽກຮ້ອງໃຫ້ມີ ມຸມມອງໄລຍະຍາວທາງດ້ານທ່າອ່ຽງຂອງເສດຖະກິດ ແລະ ຕະຫຼາດ. ພ້ອມນັ້ນ, ການລົງທຶນໃສ່ການປູກຕົ້ນໄມ້ ຍັງຮຽກຮ້ອງໃຫ້ສຸມໃສ່ ຜົນໄດ້ຮັບທາງບວກຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ການພັດທະນາ[26] ແລະ ສອດຄ່ອງກັບບັນດາກົດໝາຍ ແລະ ລະບຽບການຂອງທ້ອງຖິ່ນ, ໃນຂະນະດຽວກັນ ກໍພິຈາລະນາເຖິງຄວາມສ່ຽງດ້ານອະທິປະໄຕ ແລະ ຄວາມສ່ຽງທາງການເມືອງ, ຊີວະວິທະຍາ ແລະ ສະພາບພູມອາກາດ.

ຜົນສຳເລັດຂອງພັນໄມ້ທີ່ໄດ້ຮັບການພິສູດມາແລ້ວ ເຖິງຜົນປະໂຫຍດທາງດ້ານເສດຖະກິດໃນ ສປປ ລາວ ແລະ ຄວາມຕ້ອງການຂອງພາກພື້ນທີ່ເຂັ້ມແຂງສຳລັບໄມ້ ແລະ ເຍື່ອໄມ້ ເຮັດໃຫ້ມີ ພື້ນຖານທີ່ເຂັ້ມແຂງສຳລັບການລົງທຶນປູກຕົ້ນໄມ້. ການປ່ຽນແປງດ້ານນິຕິກຳ ແລະ ສະພາບແວດລ້ອມດ້ານລະບຽບການໃນ ສປປ ລາວ ແມ່ນສະໜັບສະໜຸນການພັດທະນາ ເນື້ອທີ່ດິນໃນການປູກຕົ້ນໄມ້ແບບຍືນຍົງ ແລະ ອຸດສາຫະກຳປຸງແຕ່ງໄມ້ທີ່ກ່ຽວຂ້ອງ. ໃນການຮັບຮູ້ເຖິງ ຜົນປະໂຫຍດຈາກຄວາມອຸດົມສົມບູນທາງທຳມະຊາດຂອງ ສປປ ລາວ, ຍຸດທະສາດແຫ່ງຊາດການເຕີບໂຕສີຂຽວ ປີ 2030 (NGGS) ແລະ ກົດໝາຍວ່າດ້ວຍ ປ່າໄມ້ ທັງສອງ ໄດ້ຖືກຮັບຮອງໃນປີ 2019. ສິ່ງເຫຼົ່ານີ້ ໄດ້ສ້າງເສັ້ນທາງເດີນໃນການພັດທະນາແບບຍືນຍົງ ໂດຍກຳນົດບຸລິມະສິດ ໃນການພັດທະນາປ່າໄມ້ເປັນພື້ນຖານເພື່ອໃຫ້ເປັນຕົວຂັບເຄື່ອນທີ່ສຳຄັນຂອງການຈະເລີນເຕີບໂຕທາງດ້ານເສດຖະກິດ, ສ້າງວຽກເຮັດງານທຳ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ລວມທັງ ການອະນຸລັກ, ການທ່ອງທ່ຽວທຳມະຊາດ, ການກຳນົດເຂດປ່າໄມ້ຂອງບ້ານ, ຜະລິດຕະພັນໄມ້ແປຮູບ ແລະ ບໍ່ແປຮູບ, ແລະ ອຸດສາຫະກຳປຸງແຕ່ງໄມ້. ລັດຖະບານ ໄດ້ລະບຸຈະແຈ້ງກ່ຽວກັບຈຸດມຸ່ງໝາຍ ເພື່ອໃຫ້ບັນລຸຄວາມຍືນຍົງທາງດ້ານການເງິນ ແລະ ສິ່ງແວດລ້ອມ, ສາມາດປັບຕົວຕໍ່ກັບການປ່ຽນແປງ ແລະ ການຈະເລີນເຕີບໂຕທາງດ້ານເສດຖະກິດທີ່ມີສ່ວນຮ່ວມຂອງຫຼາຍພາກສ່ວນ, ໂດຍສະເພາະ ຜ່ານນັກລົງທຶນພາກເອກະຊົນທີ່ເຊື່ອຖືໄດ້, ເພື່ອນຳໃຊ້ຜົນປະໂຫຍດຈາກການຂາດແຄນຊັບພະຍາກອນໄມ້ຂອງພາກພື້ນ ແລະ ຄວາມຕ້ອງການເນື້ອໄມ້ ແລະ ຜະລິດຕະພັນໄມ້. ກົດໝາຍ ວ່າດ້ວຍ ປ່າໄມ້ ໃນປີ 2019 ຮັບຮູ້ວ່າ ຂະແໜງປ່າໄມ້ທີ່ຍືນຍົງ ແລະ ໃຫ້ຜົນຜະລິດສູງ ແມ່ນຖືກສ້າງຂຶ້ນບົນພື້ນຖານການປະສົມປະສານຂອງການຄຸ້ມຄອງຈັດການປ່າໄມ້ແບບຍືນຍົງ (SFM) ແລະ ການລົງທຶນຂອງພາກເອກະຊົນທີ່ມີຄຸນນະພາບສູງ ສາມາດຟື້ນຟູສະພາບບໍລິເວນປ່າເຊື່ອມໂຊມໄດ້.

ການຄວບຄຸມການຕັດ ແລະ ຫ້າມສົ່ງອອກໄມ້ທ່ອນຫວ່າງບໍ່ດົນມານີ້ ໄດ້ເຮັດໃຫ້ເກີດການປະຕິຮູບທາງດ້ານນະໂຍບາຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ມາດຕະຖານ ແລະ ການປະຕິບັດໃຫ້ສອດຄ່ອງກັບລະບຽບການ, ແຕ່ ການຄຸ້ມຄອງປ່າໄມ້ທີ່ອ່ອນແອ ສິ່ງຜົນເສຍຫາຍຕໍ່ຜະລິດຕະພາບ ແລະ ຄວາມຍືນຍົງຂອງປ່າໄມ້. ບັນຫາຕ່າງໆ ລວມເຖິງ ການຂາດຊັບພະຍາກອນໃນໜ່ວຍງານຕ່າງໆຂອງພາກລັດ, ຄວາມບໍ່ຈະແຈ້ງໃນການອະນຸຍາດສຳປະທານ ແລະ ລະບຽບການຂອງອຸດສາຫະກຳ, ການເກັບລາຍຮັບທີ່ບໍ່ມີປະສິດທິຜົນຈາກພາກທຸລະກິດ, ແລະ ຄວາມຕັ້ງໃຈ ເພື່ອຫຼີກເວັ້ນ ຫຼື ບໍ່ປະຕິບັດໃຫ້ສອດຄ່ອງກັບການອະນຸຍາດສຳປະທານ.

ໂຄງລ່າງພື້ນຖານດ້ານການຂົນສົ່ງ ພວມໄດ້ຮັບການປັບປຸງຢ່າງຕັ້ງໜ້າ: ໃນຖານະທີ່ເປັນປະເທດບໍ່ມີຊາຍແດນຕິດກັບທະເລ ຂອງ ສປປ ລາວ ແມ່ນຂຶ້ນກັບການຂົນສົ່ງທາງບົກຢ່າງຫຼວງຫຼາຍ ສຳລັບການເຊື່ອມຈອດທາງດ້ານການຄ້າ ທັງພາຍໃນ ແລະ ຕ່າງປະເທດ[27]. ການເຊື່ອມຈອດຂອງເສັ້ນທາງ ແມ່ນອີງປະກອບພື້ນຖານທີ່ສຳຄັນໃນແຜນຂອງລັດຖະບານລາວ ແລະ ເສັ້ນທາງ ແມ່ນກວມເອົາເກີນກວ່າ 98% ຂອງຜູ້ໂດຍສານ ແລະ 86% ຂອງການເຄື່ອນຍ້າຍຂົນສົ່ງສິນຄ້າ. ການນຳໃຊ້ຕາໜ່າງເສັ້ນທາງບົກແຫ່ງຊາດ ຍັງສືບຕໍ່ຂະຫຍາຍຕົວເພີ່ມຂຶ້ນທີ່ອັດຕາ 5%–8% ຕໍ່ປີ ສຳລັບສິນຄ້າ ແລະ 8%–10% ສຳລັບຜູ້ໂດຍສານ, ໂດຍສອດຄ່ອງກັບການເຕີບໂຕຂອງເສດຖະກິດ[28] ແລະ ກໍໄດ້ຮັບການສະໜັບສະໜຸນຢ່າງຫຼວງຫຼາຍຈາກສາກົນ.

ໂດຍສອດຄ່ອງກັບຄວາມມຸ່ງມາດປາດຖະໜາໃນການປ່ຽນແປງປະເທດຈາກສະພາບບໍ່ມີຊາຍແດນຕິດກັບທະເລ ມາເປັນ ປະເທດ ທີ່ມີການເຊື່ອມຈອດທາງບົກ, ສປປ ລາວ ເຂົ້າຮ່ວມເປັນພາຄີຂອງສັນຍາລະຫວ່າງລັດຖະບານ ກ່ຽວກັບ ທ່າບົກ ຊຶ່ງມີຈຸດມຸ່ງໝາຍ ເພື່ອສົ່ງເສີມ "ການຮັບຮູ້ໃນລະດັບສາກົນກ່ຽວກັບທ່າບົກ, ການອຳນວຍຄວາມສະດວກໃຫ້ແກ່ການລົງທຶນໃນໂຄງລ່າງພື້ນຖານທ່າບົກ, ການປັບປຸງປະສິດທິພາບຂອງການປະຕິບັດງານ ແລະ ການສົ່ງເສີມຄວາມຍືນຍົງທາງດ້ານສິ່ງແວດລ້ອມຂອງການຂົນສົ່ງ". ທ່າບົກ ທີ່ອອກແບບໃນ ສປປ ລາວ ລວມມີ ຫຼາຍບ່ອນ ໃນບໍລິເວນໃກ້ຄຽງກັບບ່ອນທີ່ສົນໃຈປູກຕົ້ນໄມ້ເສດຖະກິດ ຊຶ່ງຈະສາມາດສະໜອງຜະລິດຕະພັນໃຫ້ແກ່ຕະຫຼາດພາກພື້ນ[29]:

---

[25] Frederick Cubbage et al (2020). ການລົງທຶນກ່ຽວກັບໄມ້ຂອງໂລກ, 2005 ຫາ 2017. ນະໂຍບາຍປ່າໄມ້ ແລະ ເສດຖະກິດ, ສະບັບທີ 112. . https://doi.org/10.1016/j.forpol.2019.102082

[26] Cubbage et al (2020). Op. cit.

[27] ການເປີດກວ້າງສູ່ການພັດທະນາ, ສປປ ລາວ(2018).ໂຄງລ່າງພື້ນຖານ.ເຂົ້າເບິ່ງໄດ້ທີ່: https://laos.opendevelopmentmekong.net/topics/infrastructure

[28] ADB (2010). ການປະເມີນແຜນງານການຊ່ວຍເຫຼືອຂະແໜງການ ສຳລັບ ຂະແໜງຂົນສົ່ງໃນ ສປປ ລາວ.

[29] ຍຸດທະສາດການຂົນສົ່ງສິນຄ້າ ແລະ ການພັດທະນາໂລຈິດສະຕິກ ໃນ ສປປ ລາວ. ບົດບັນຍາຍໃນກອງປະຊຸມວິຊາການກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ການເຊື່ອມຈອດທາງດ້ານການຂົນສົ່ງໃນບັນດາປະເທດ CLMVT. ຢາງກຸ້ງ, ປະເທດ ມຽນມາ, ວັນທີ 9–10 ຕຸລາ 2018. ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ສປປ ລາວ.

ທ່ານາແລ້ງ (ນະຄອນຫຼວງວຽງຈັນ); ຫ້ວຍຊາຍ (ແຂວງ ບໍ່ແກ້ວ); ຫຼັກຊາວ (ແຂວງ ບໍລິຄຳໄຊ); ຫຼວງພະບາງ (ແຂວງ ຫຼວງພະບາງ); ນາຕຽ (ແຂວງ ຫຼວງນ້ຳທາ); ເມືອງໄຊ (ແຂວງ ອຸດົມໄຊ); ປາກເຊ (ແຂວງ ຈຳປາສັກ); ເຊໂນ (ແຂວງ ສະຫວັນນະເຂດ); ແລະ ທ່າແຂກ (ແຂວງ ຄຳ ມ່ວນ).

ເສັ້ນທາງລົດໄຟລາວ-ຈີນ ໄລຍະທາງ 471 ກມ ຈາກ ຊາຍແດນຕິດກັບ ສປ ຈີນທີ່ດ່ານ ບໍ່ເຕັນ ມາຮອດ ນະຄອນຫຼວງວຽງຈັນ ແມ່ນການລົງທຶນ ຮ່ວມກັນລະຫວ່າງ ລັດຖະບານລາວ ແລະ ລັດຖະບານ ຈີນ ແລະ ຄາດວ່າຈະສຳເລັດຕາມແຜນໃນປີ 2021. 2021. ລັດຖະບານຈີນ ຈະລົງທຶນ 70% ໃນມູນຄ່າ $6 ຕື້ໂດລາ, ໂດຍທີ່ ລັດຖະບານລາວ ຈະປະກອບສ່ວນທີ່ຍັງເຫຼືອ 30%. ລາງທາງລົດໄຟດ່ຽວທີ່ເປັນມາດຕະຖານ ຈະມີ 31 ສະຖານີ, ໃນນີ້ ເກົ້າສະຖານ[30] ຈະຈັດໃຫ້ເປັນ “ສູນກາງຮອງຮັບ” ເພື່ອການພັດທະນາ ແລະ ມີຂີດຄວາມສາມາດ ເພື່ອດຳເນີນການຂົນສົ່ງຕູ້ຄອນ ເທນເນີ ແລະ ອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງວັດຖຸດິບ, ໄມ້ ແລະ ຜະລິດຕະພັນໄມ້ ທາງພາກເໜືອ ໄປຍັງ ສປ ຈີນ ແລະ ໃນທ້າຍທີ່ສຸດ, ໄປຫາ ທ່າເຮືອທະເລໃນປະເທດໄທ (ເອກະສານຄັດຕິດ 1). ໂອກາດຕ່າງໆເກີດຂຶ້ນ ເພື່ອສ້າງກຸ່ມຂອງອຸດສາຫະກຳປ່າໄມ້ອ້ອມຮອບ “ສູນກາງຮອງ ຮັບ” ຕົ້ນຕໍຂອງເສັ້ນທາງລົດໄຟ ຊຶ່ງ ອາດຈະສາມາດຂົນສົ່ງຜະລິດຕະພັນປ່າໄມ້ທັງພາຍໃນ ແລະ ຕ່າງປະເທດໄດ້ຢ່າງມີຜົນກຳໄລ, ການຂະຫຍາຍ ຕະຫຼາດທີ່ເປັນທ່າແຮງສຳລັບອຸດສາຫະກຳປ່າໄມ້ ແລະ ສ້າງລາຍຮັບໄດ້ຢ່າງຫຼວງຫຼາຍສຳລັບເສັ້ນທາງລົດໄຟ ແລະ ສປປ ລາວ.
ອິນເຕີເນັດ ແລະ ການຄອບຄຸມສັນຍາໂທລະສັບມືຖື ແມ່ນໃຊ້ໄດ້ເກືອບທຸກບ່ອນໃນ ສປປ ລາວ. ການນຳໃຊ້ອິນເຕີເນັດ ເພີ່ມຂຶ້ນຢ່າງໄວວາຈາກ 0.3% ຂອງປະຊາກອນໃນປີ 2004 ມາເປັນ 18.2% ໃນປີ 2015, ການປັບປຸງການສື່ສານ ແລະ ການສະໜອງປະໂຫຍດໃຫ້ແກ່ບັນດາຜູ້ເຂົ້າ ຮ່ວມໃນຕ່ອງໂສ້ການສະໜອງທັງໝົດ ຊຶ່ງກ່ຽວຂ້ອງກັບ ການປູກ, ການປຸງແຕ່ງ, ການຕະຫຼາດ ແລະ ການຂາຍຜະລິດຕະພັນໄມ້.

ຄວາມຕ້ອງການຂອງໂລກສຳລັບຜະລິດຕະພັນປ່າໄມ້ທີ່ຖືກຮັບຮອງຄວາມຖືກຕ້ອງຕາມກົດໝາຍ ແລະ ຄວາມຍືນຍົງ ແມ່ນເພີ່ມຂຶ້ນຢ່າງໄວວາ ໃນຕະຫຼາດທີ່ສາມາດຊື້ ແລະ ຈ່າຍໃນລາຄາສູງ, ແລະ ໃນບັນດາເສດຖະກິດທີ່ມີອຸດສາຫະກຳການນຳໃຊ້ໄມ້ຢ່າງສຳຫຼວງຫຼາຍ. ຜະລິດຕະພັນໄມ້ ແມ່ນສິ່ງໄປບັນຫາປະເທດທີ່ມີຄວາມຕ້ອງການໃຫ້ຢັ້ງຢືນເຖິງ ຄວາມຖືກຕ້ອງຕາມກົດໝາຍ ແລະ ຄວາມຍືນຍົງໃນການຜະລິດ ຜ່ານລະບອບການ ຮັບຮອງທີ່ເຊື່ອຖືໄດ້. ບັນດາບໍລິສັດທີ່ມີຊື່ສຽງ ຕ້ອງໄດ້ຄຳນຶງເຖິງການຍຶດໝັ້ນຕໍ່ຂອບວຽກທາງດ້ານລະບຽບການ ແລະ ກົດໝາຍຄຸ້ມຄອງ. ມີວິ ວັດທະນາການກ່ຽວກັບ “ເຕັກໂນໂລຊີສີຂຽວ” ແຕ່ ຄວາມຕ້ອງການທັງໝົດ ກໍຍັງຢາກໃຫ້ມີການຢັ້ງຢືນເຖິງຄວາມຖືກຕ້ອງຕາມກົດໝາຍສຳລັບ ຜະລິດຕະພັນໄມ້ທີ່ເປັນວັດຖຸດິບນັ້ນ.

ຍັງຄົງມີຄວາມບໍ່ແນ່ນອນທີ່ກ່ຽວຂ້ອງກັບຂັ້ນຕອນການບໍລິຫານ ທີ່ກຳນົດໄວ້ກ່ຽວກັບການກຳນົດເຂດພື້ນທີ່ ແລະ ການຈັດສັນທີ່ດິນສຳລັບການ ປູກຕົ້ນໄມ້ເສດຖະກິດ ພາຍໃນເຂດປ່າຜະລິດ. ຄວາມລ່າຊ້າໃນການສະໜອງການເຂົ້າເຖິງທີ່ຖືກຕ້ອງຕາມກົດໝາຍ ໃນເຂດບໍລິເວນໃກ້ຄຽງກັນ ຂອງດິນປ່າທີ່ເສື່ອມໂຊມ ແລະ ເປົ່າແປນທີ່ມີຢູ່ຢ່າງເໝາະສົມ, ແລະ ຂະບວນການລ່າຊ້າສຳລັບສັນຍາສຳປະທານທີ່ດິນ, ທັງໝົດນັ້ນ ຈຳກັດການ ລົງທຶນໃນການພັດທະນາການປູກຕົ້ນໄມ້, ການພັດທະນາອຸດສາຫະກຳປ່າໄມ້ປູກ ແລະ ການຟື້ນຟູປ່າໄມ້.

ຜົນກະທົບຕໍ່ ສປປ ລາວ

ການປະກອບສ່ວນເຂົ້າໃນເສດຖະກິດແຫ່ງຊາດ. ເຖິງແມ່ນວ່າຈະມີການຫ້າມສົ່ງອອກໄມ້ທ່ອນທີ່ຍັງບໍ່ທັນແປຮູບ ກໍຕາມ, ຂະແໜງປ່າໄມ້ ໃນ ສປປ ລາວ ໄດ້ປະກອບສ່ວນຢ່າງສຳຄັນເຂົ້າໃນ GDP ແລະ ມີທ່າແຮງໃນການຂັບເຄື່ອນ “ເສດຖະກິດສີຂຽວ” ຖ້າຫາກ ໄດ້ຮັບການອຳນວຍຄວາມສະດວກ ຈາກລະບອບຂອງການຄຸ້ມຄອງທີ່ດີໃນແງ່ນະໂຍບາຍ, ຄວາມສອດຄ່ອງກັນທາງດ້ານນະໂຍບາຍ, ຄວາມຍືນຍົງ, ການມີສ່ວນຮ່ວມ ແລະ ສາມາດ ເຮັດໃຫ້ເກີດຜົນກຳໄລໄດ້. ຂະແໜງປ່າໄມ້ທີ່ປະຕິບັດງານໄດ້ດີ ຈະຊ່ວຍປະກອບສ່ວນເຂົ້າໃນເສດຖະກິດແຫ່ງຊາດ ຜ່ານຜົນຂອງຕົວທະວີຄູນທາງ ດ້ານການສ້າງວຽກເຮັດງານທຳ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ການຜະລິດວັດຖຸດິບສຳລັບການກໍ່ສ້າງ ແລະ ການປຸງແຕ່ງໄມ້, ການນຳໃຊ້ ໂຄງລ່າງພື້ນຖານແຫ່ງຊາດທີ່ມີປະສິດທິພາບ ແລະ ໃຫ້ຜົນກຳໄລຫຼາຍຂຶ້ນ ເຊັ່ນ ທາງລົດໄຟ ແລະ ການພັດທະນາຫຼາຍວິສາຫະກິດທີ່ກ່ຽວຂ້ອງກັບ ຕ່ອງໂສ້ການສະໜອງຜະລິດຕະພັນປ່າໄມ້.

ການປູກຕົ້ນໄມ້ໂດຍເຈົ້າຂອງທີ່ດິນຂະໜາດນ້ອຍ ເປັນຜູ້ປະກອບສ່ວນສຳຄັນເຂົ້າໃນການສະໜອງໄມ້: ການລົງທຶນທາງດ້ານເສດຖະກິດຂະໜາດ ໃຫຍ່ ຊຸກຍູ້ໃຫ້ມີການເຮັດສວນປ່າປູກຂອງເຈົ້າຂອງທີ່ດິນຂະໜາດນ້ອຍ, ທັງແບບປູກຄືນ ແລະ ພາຍໃຕ້ ການເປັນຄູ່ຮ່ວມມືລະຫວ່າງພາກລັດ-ເອກະຊົນ ຊຶ່ງຈັດໃຫ້ມີແນວທາງທີ່ປະຕິບັດໄດ້ຈິງ ແລະ ຍືນຍົງ ສຳລັບໝູ່ບ້ານ ເພື່ອເຂົ້າຮ່ວມໃນການປູກປ່າໄມ້ ຜ່ານການຈ້າງງານໂດຍກົງ ແລະ ລະບຽບການຂອງຜູ້ປູກພາຍນອກ. ການລົງທຶນປູກປ່າເສດຖະກິດ ເຮັດໃຫ້ເກີດຜົນປະໂຫຍດ ຜ່ານການມີສ່ວນຮ່ວມທີ່ມີປະສິດທິຜົນກັບບັນດາ ຊຸມຊົນທ້ອງຖິ່ນ ຜ່ານການສະໜອງໄມ້ທີ່ເພີ່ມຂຶ້ນ ແລະ ການຮ່ວມມືກັບຊຸມຊົນ. ການພັດທະນາການປູກໄມ້ໂດຍເຈົ້າຂອງທີ່ດິນຂະໜາດນ້ອຍ ເຮັດໃຫ້ເກີດໂອກາດສຳລັບຊາວສວນເພື່ອແບ່ງປັນໂອກາດທີ່ສະໜອງໃຫ້[31] ໂດຍອຸດສາຫະກຳການປູກຕົ້ນໄມ້, ສ້າງວຽກເຮັດງານທຳ ແລະ ສ້າງ ຜົນກຳໄລຈາກການຂາຍໄມ້ປູກ ຄືກັບ ປະສົບການຂອງບັນດາປະເທດໃກ້ຄຽງ ເຊັ່ນ ຈີນ, ຫວຽດນາມ ແລະ ໄທ[32]. ການຮ່ວມມືປະສານງານກັນ ດັ່ງກ່າວ ຈະສ້າງຄວາມຫຼາກຫຼາຍໃຫ້ແກ່ການນຳໃຊ້ທີ່ດິນ, ປັບປຸງສະພາບເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ ແລະ ເຮັດໃຫ້ເກີດຜົນປະໂຫຍດຕໍ່ ສິ່ງແວດລ້ອມ.

[30] ໜັງສືພິມວຽງຈັນທາມ: ການສົ່ງເສີມການຂົນສົ່ງສິນຄ້າ ບໍລິສັດທາງລົດໄຟລາວ-ຈີນ: ບໍ່ເຕັນ, ນ້ຳທາ, ເມືອງໄຊ, ຫຼວງພະບາງ, ກາສີ, ວັງວຽງ, ໂພນໂຮງ ແລະ ວຽງຈັນ. ເອກະສານຄັດຕິດ 1.

[31] IFC (2018). ການປະເມີນວິນິດໄສ ລະບຽບຜ້ປກຈາກບ່ອນອື່ນ ແລະ ການສາທິດຕົວແບບໃນ ສປປ ລາວ. ໂຄງການ ກະສິກຳ-ປ່າໄມ້ລາວ IFC #594367 ກະກຽມໂດຍ ທລະກິດກະສິກຳປຸງແຕ່ງ ແລະ ການບໍລິການ IFC (MAS), ການບໍລິການທີ່ປຶກສາ. ເດືອນ ກຸມພາ 2018, ວຽງຈັນ, ສປປ ລາວ. 56p

[32] Midgley, S. & Stevens, P. & Arnold, R. (2017). ຊັບສິນທີ່ຖືກເຊື່ອງໄວ້: ຊັບພະຍາກອນໄມ້ຂອງເຈົ້າຂອງຂະໜາດນ້ອຍຂອງ ອາຊີ ແລະ ການປະກອບສ່ວນ ຂອງພວກເຂົາຕໍ່ກັບຕ່ອງໂສ້ການສະໜອງຂອງໄມ້ເສດຖະກິດ. ປ່າໄມ ອິດສະຕາລິ. 1-16. 10.1080/00049158.2017.1280750 New-Green-Forest-Economy-in-Lao-PDR-SustainingForest-Landscapes-and-Livelihoods.pdf

ຜົນໄດ້ຮັບທີ່ຍືນຍົງສຳລັບການລົງທຶນໃນວິສາຫະກິດປ່າໄມ້ເສດຖະກິດໃນ ສປປ ລາວ ຈະຮຽກຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງດ້ານມາດຕະຖານ ແລະ ການປະຕິບັດໃຫ້ສອດຄ່ອງກັບລະບຽບການ, ໂດຍຮັບຮູ້ວ່າ ການຄຸ້ມຄອງປ່າໄມ້ທີ່ອ່ອນແອ ຈະເປັນອຸປະສັກຕໍ່ກັບຜະລິດຕະພາບ ແລະ ຄວາມຍືນຍົງ. ຂໍ້ຈຳກັດສະເພາະໃນຂະແໜງປ່າໄມ້ປູກ ລວມມີ: (i) ການເຂົ້າເຖິງທີ່ດິນຫຍຸ້ງຍາກ ພາຍໃຕ້ນະໂຍບາຍ ແລະ ຂັ້ນຕອນທີ່ຈຳກັດສຳລັບການເຂົ້າເຖິງທີ່ດິນ ແລະ ການຮັບປະກັນສິດດ້ານຄວາມປອດໄພ; ແລະ (ii) ຄວາມຫຍຸ້ງຍາກໃນປະຈຸບັນ ຊຶ່ງເປັນການປັບໃຫ້ເຂົ້າກັນດ້ານຈຸດປະສົງ ແລະ ຂັ້ນຕອນການປູກປ່າໄມ້ ກັບ ການກວດກາດ້ານສິ່ງແວດລ້ອມໃນເບື້ອງຕົ້ນ (IEE) ແລະ ຂໍ້ກຳນົດໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA) ຊຶ່ງກວມເອົາກິດຈະກຳການຕັດໄມ້ເກັບກ່ຽວ, ການແກ່ລາໄມ້ ແລະ ກິດຈະກຳປຸງແຕ່ງ.

ຄວາມຍືນຍົງ. ການຮັບປະກັນທີ່ດີສຸດດ້ານຄວາມຍືນຍົງຂອງການປູກຕົ້ນໄມ້ເສດຖະກິດຂະໜາດໃຫຍ່ ແລະ ການປູກຕົ້ນໄມ້ໃນສວນຂະໜາດນ້ອຍ ໂດຍເຈົ້າຂອງທີ່ດິນຂະໜາດນ້ອຍ ແມ່ນ ເພື່ອເຮັດໃຫ້ເກີດການເພິ່ງພາໜ້ອຍສຸດຕໍ່ປັດໄຈປ້ອນເຂົ້າຈາກພາຍນອກ (ວັດຖຸ ແລະ ການໃຫ້ຄຳປຶກສາ), ການຍົກເລີກເພິ່ງພາປັດໄຈປ້ອນເຂົ້າ-ຈາກພາຍນອກທີ່ບໍ່ຄາດຄິດ ຊຶ່ງອາດຈະສົ່ງຜົນກະທົບຮຸນແຮງຕໍ່ຜະລິດຕະພາບໄດ້. ແນວທາງແຈ້ງເຕືອນລ່ວງໜ້າ ຄວນປະສົມປະສານກັບພັນທະໃນການປັບປຸງຜະລິດຕະພາບຂອງການປູກຕົ້ນໄມ້ ໃນຫຼາຍຊຸດຜັດປ່ຽນປູກ, ການເກີດມີພະຍາດ, ການຄວບຄຸມແມງໄມ້ ແລະ ວັດຊະພືດ, ການບຳລຸງຮັກສາໃຫ້ຝຸ່ນດິນ, ແລະ ການຄຸ້ມຄອງຈັດການປ່າໄມ້ທີ່ມີປະສິດທິຜົນ ບົນພື້ນຖານຂໍ້ມູນທີ່ເປັນໄປໄດ້ທີ່ດີສຸດ.

ການຜະລິດທີ່ຍືນຍົງ, ຂີດຄວາມສາມາດໃນການຮັກສາ ຫຼື ປັບປຸງຜະລິດຕະພາບຜ່ານການຜັດປ່ຽນຊຸດການປູກຕົ້ນໄມ້ຕ່ຳໆມາ, ຈະຕ້ອງການຄວາມຮູ້ໃໝ່ ໂດຍອີງໃສ່ ການຄົ້ນຄວ້າວິໄຈ ແລະ ການພັດທະນາທີ່ເຂັ້ມແຂງ, ແລະ ກ່ຽວຂ້ອງກັບກິດຈະກຳທາງດ້ານວິຊາການກະສິກຳ ຊຶ່ງສະໜັບສະໜຸນການສ້າງຕັ້ງ ແລະ ການຄຸ້ມຄອງຕົ້ນໄມ້ປູກ.

ຂໍ້ສະເໜີແນະນຳ

ລັດຖະບານລາວ ມີຈຸດມຸ່ງໝາຍຢ່າງຈະແຈ້ງ ເພື່ອບັນລຸຄວາມຍືນຍົງດ້ານການເງິນ ແລະ ສິ່ງແວດລ້ອມ, ການຂະຫຍາຍຕົວທາງດ້ານເສດຖະກິດທີ່ເຂັ້ມແຂງໝັ້ນທ່ຽງ ແລະ ມີສ່ວນຮ່ວມຂອງທຸກພາກສ່ວນ, ໂດຍສະເພາະ ຜ່ານການລົງທຶນຂອງພາກເອກະຊົນທີ່ໜ້າເຊື່ອຖືໄດ້. ການລົງທຶນ ໃນການປູກຕົ້ນໄມ້ທີ່ມີການຄຸ້ມຄອງແບບຍືນຍົງ ຈະຊ່ວຍໃນການບັນລຸເປົ້າໝາຍການພັດທະນາແຫ່ງຊາດທີ່ຫຼາກຫຼາຍນີ້ໄດ້ ໃນ ສປປ ລາວ. ການປັບປຸງເງື່ອນໄຂຄວາມພ້ອມ-ກ່ອນ ສຳລັບ ການລົງທຶນປູກໄມ້ ແລະ ການຫຼຸດຜ່ອນຄວາມສ່ຽງ ແມ່ນສຳຄັນຍິ່ງ ເພື່ອຊຸກຍູ້ການມີສ່ວນຮ່ວມຂອງພາກເອກະຊົນ.

ຂໍແນະນຳວ່າ ການເປັນຄູ່ຮ່ວມມືຂອງພາກເອກະຊົນ ໂດຍໄດ້ຮັບການຊ່ວຍເຫຼືອປະສານງານຈາກລັດຖະບານ ແຫ່ງ ສປປ ລາວ ເພື່ອຊອກຫາ ຄວາມສອດຄ່ອງເໝາະສົມ ແລະ ຄວາມຈະແຈ້ງທາງດ້ານກົດໝາຍ ແລະ ລະບຽບການຕ່າງໆ ສຳລັບ:

- ຄວາມໝາຍສຳຄັນທາງດ້ານການເງິນໃນການລົງທຶນໃສ່ການປູກໄມ້ເສດຖະກິດ, ໂດຍສະເພາະ ກ່ຽວກັບບັນຫາ ອາກອນ ແລະ ລະບຽບການດ້ານສິ່ງແວດລ້ອມ;
- ການກຳນົດພື້ນທີ່ບໍລິເວນປ່າປູກ ແລະ ການຈັດສັນນຳໃຊ້ທີ່ດິນ, ໂດຍສະເພາະ ໃນເຂດ ແລະ ອ້ອມຮອບເຂດບໍລິເວນປ່າຜະລິດ ຊຶ່ງຈະມີອິດທິພົນຢ່າງຫຼວງຫຼາຍຕໍ່ກັບການລົງທຶນ ແລະ ການເປັນຄູ່ຮ່ວມມືກັບບັນດາຊຸມຊົນ; ແລະ
- ການສ້າງຄວາມງ່າຍດາຍທາງດ້ານລະບຽບການ ທີ່ຄຸ້ມຄອງການນຳໃຊ້ທີ່ດິນ ແລະ ການຕະຫຼາດຜະລິດຕະພັນໄມ້ ເພື່ອເຮັດໃຫ້ ຜູ້ປູກທັງຂະໜາດນ້ອຍ ແລະ ໃຫຍ່ ສາມາດຂຶ້ນທະບຽນຕົ້ນໄມ້ປູກຂອງພວກເຂົາ ແລະ ຕັດ ແລະ ຂາຍຕົ້ນໄມ້ປູກຂອງພວກເຂົາຢ່າງຖືກຕ້ອງຕາມກົດໝາຍ.

ຂໍແນະນຳວ່າ ລັດຖະບານ ຄວນຊຸກຍູ້ໃນການຈັດສັນຊັບພະຍາກອນ ເພື່ອສະໜັບສະໜຸນການປ່ຽນແປງທັງໝົດເຫຼົ່ານີ້, ແລະ ຄວນສ້າງຄວາມເຂັ້ມແຂງດ້ານການປະຕິບັດໃຫ້ສອດຄ່ອງກັບນິຕິກຳ, ການຕິດຕາມກວດກາ, ການລາຍງານ ແລະ ການແກ້ໄຂບັນຫາຕ່າງໆ.

ຂໍແນະນຳວ່າ ຄວນເອົາໃຈໃສ່ຢ່າງພຽງພໍ ເພື່ອສະໜັບສະໜຸນການຄົ້ນຄວ້າວິໄຈ ແລະ ພັດທະນາ ຜ່ານການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາໜ່ວຍງານການຄົ້ນຄວ້າວິໄຈ ແລະ ການສຶກສອນ ແລະ ເຊື່ອມໂຍງກັບບັນດາໜ່ວຍງານຄົ້ນຄວ້າວິໄຈ ແລະ ມະຫາວິທະຍາໄລພາຍນອກ.

ບັນຫາທ້າທາຍຂອງການລົງທຶນ

ຄຳອະທິບາຍກ່ຽວກັບບັນຫາ

ຂະແໜງປ່າໄມ້ປູກໂດຍເຈົ້າຂອງທີ່ດິນຂະໜາດນ້ອຍ ແລະ ປ່າໄມ້ເສດຖະກິດໃນ ສປປ ລາວ, ປະຈຸບັນ ກວມເອົາພຽງແຕ່ 70.000 ເຮັກຕາ, ພົບ ບັນຫາຂາດການຄຸ້ມຄອງຈັດການທີ່ພຽງພໍເໝາະສົມ, ການເຂົ້າເຖິງຕະຫຼາດທີ່ຈຳກັດ ແລະ ນະໂຍບາຍຂອງລັດຖະບານທີ່ສະຫຼັບຊັບຊ້ອນ, ທັງໝົດ ນັ້ນ ມີທ່າອ່ຽງເຮັດໃຫ້ເກີດຜົນຕອບແທນທາງດ້ານການເງິນທີ່ຫຼຸດລົງ ແລະ ບໍ່ຊຸກຍູ້ສິ່ງເສີມການລົງທຶນໃນການປູກຕົ້ນໄມ້ໃໝ່. ໃນຂະແໜງການ ປູກຕົ້ນໄມ້ສັກ, ນະໂຍບາຍທີ່ລ້າສະໄໝ ແລະ ແນວທາງການປູກປ່າໄມ້ທີ່ບໍ່ໄດ້ມາດຕະຖານ ຊຶ່ງອີງໃສ່ຄວາມຮູ້ເກົ່າທີ່ມີ ໄດ້ເຮັດໃຫ້ເກີດຄວາມສ່ຽງ ດ້ານຜົນຕອບແທນທີ່ຕ່ຳ ໃຫ້ແກ່ຜູ້ປູກໄມ້ສັກ ແລະ ໄດ້ໄມ້ສັກຄຸນນະພາບຕ່ຳສະໜອງໃຫ້ໂຮງງານປຸງແຕ່ງໄມ້.

ຫຼາຍແນວຄິດລິເລີ່ມຫວ່າງບໍ່ດົນມານີ້ ຊອກຫາວິທີການແກ້ໄຂບັນຫາທ້າທາຍຕໍ່ກັບປ່າໄມ້ປູກ. ໃນໂຄງການການປົກປັກຮັກສາຂອບເຂດບໍລິເວນ ຂອງປ່າໄມ້ ແລະ ການດຳລົງຊີວິດຂອງປະຊາຊົນ[33] ຮ່ວມກັບລັດຖະບານ, ທະນາຄານໂລກ ໄດ້ລະບຸຈະແຈ້ງເຖິງການລວມເອົາການພັດທະນາການ ອຳນວຍຄວາມສະດວກໃຫ້ແກ່ສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງບໍລິຫານ ຊຶ່ງຈະເຮັດໃຫ້ເກີດການເພີ່ມຜົນທາງການ ເງິນໃຫ້ແກ່ການລົງທຶນຂອງພາກເອກະຊົນ. ການປຶກສາຫາລືຫຼາຍດ້ານ ຊຶ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານ, ສູນຄົ້ນຄວ້າວິໄຈກະສິກຳ ສາກົນຂອງປະເທດອົດສະຕຣາລີ (ACIAR)[34], ທະນາຄານໂລກ, IFC ແລະ ກຸ່ມ ອິນເຕີລາເກ້ນ[35], ໄດ້ລະບຸເຖິງ ບາງບັນຫາທ້າທາຍ ແລະ ໂອກາດ ທີ່ເກີດຂຶ້ນ ຊຶ່ງກ່ຽວຂ້ອງກັບ ແຜນການເປີດເຂດບໍລິເວນປ່າຜະລິດທີ່ເສື່ອມໂຊມ (PFAs) ສຳລັບການລົງທຶນໃນການປູກປ່າໄມ້, ແລະ ລະບຸເຖິງໂອ ກາດສຳລັບການປະຕິບັດງານຮ່ວມກັນຂອງບັນດາຜູ້ມີສ່ວນຮ່ວມໃນຂະແໜງປ່າໄມ້. ໃນນີ້ ແມ່ນມີ:

ຫຼາຍໂຄງສ້າງການຈັດຕັ້ງ ແລະ ອຳນາດຕັດສິນບັນຫາຂອງພາກລັດຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ. ຫຼາຍບັນຫາທ້າທາຍໃນການສ້າງຕັ້ງ ແລະ ຄຸ້ມຄອງການປູກໄມ້ເສດຖະກິດທີ່ກ່ຽວຂ້ອງກັບ ຄວາມຮັບຜິດຊອບທີ່ບໍ່ຈະແຈ້ງ ແລະ ໜ້າທີ່ທີ່ກ່ຽວຂ້ອງ ລະຫວ່າງ ໜ່ວຍງານຕ່າງໆ ແລະ ອຳນາດໃນການຕັດສິນບັນຫາ. ການຄຸ້ມຄອງສາມຂັ້ນຂອງລັດຖະບານ ມີຄວາມທັບຊ້ອນກັນດ້ານຄວາມຮັບຜິດຊອບ ໃນການວາງແຜນ, ການກຳ ນົດບໍລິເວນພື້ນທີ່ ແລະ ການຈັດສັນທີ່ດິນ, ສຳລັບ ການຄວບຄຸມຕາມກົດໝາຍ ແລະ ລະບຽບການໃນການນຳໃຊ້ທີ່ດິນ ແລະ ການຄຸ້ມຄອງປ່າໄມ້, ເພື່ອເກັບກຳຫຼາຍຮູບແບບຂອງຄ່າທຳນຽມ ແລະ ອາກອນລ່ວງໜ້າ ແລະ ຫຼັງການຕັດຕົ້ນໄມ້, ແລະ ສຳລັບການຂາຍຜະລິດຕະພັນໄມ້ໃນຕະຫຼາດທີ່ ຕັດ ແລະ ປຸງແຕ່ງຈາກສວນປູກທີ່ຖືກຕ້ອງຕາມກົດໝາຍ.

ໂດຍສະເພາະ, ຂະບວນການທີ່ກ່ຽວຂ້ອງໃນການກຳນົດບໍລິເວນພື້ນທີ່ທີ່ມີໄວ້ສຳລັບການປູກໄມ້ເສດຖະກິດ ພາຍໃນເຂດປ່າຜະລິດ ແລະ ຈາກນັ້ນ, ການຈັດສັນບໍລິເວນທີ່ກຳນົດໄວ້ນັ້ນ ແມ່ນສຳຄັນຍິ່ງ ສຳລັບ ນັກລົງທຶນໃນການປູກຕົ້ນໄມ້ເສດຖະກິດ, ແລະ ນັກລົງທຶນ ຄວນຮູ້ ແລະ ປະສານ ສົມທົບກັບບຸກຄະລາກອນທຸກຂັ້ນທີ່ກ່ຽວຂ້ອງຂອງລັດຖະບານ. ເຊັ່ນດຽວກັນນັ້ນ, ຄວາມສອດຄ່ອງກັນກັບກົດໝາຍ ແລະ ລະບຽບການຕ່າງໆ ດ້ານສິ່ງແວດລ້ອມ ກໍສຳຄັນໃນຂະບວນການນີ້.

ໂດຍມີຫຼາຍອົງການ/ໜ່ວຍງານຄຸ້ມຄອງຂອງລັດທຸກຂັ້ນທີ່ກ່ຽວຂ້ອງໃນທຸກດ້ານຂອງການສ້າງຕັ້ງ ແລະ ຄຸ້ມຄອງປ່າໄມ້ປູກ, ມີທ່າອ່ຽງເກີດຄວາມ ສັບສົນ ແລະ ຂັດແຍ້ງກັນເກີດຂຶ້ນ, ສະນັ້ນ, ນັກລົງທຶນ ຈຳເປັນຕ້ອງຮັບຮູ້ຢ່າງຕໍ່ເນື່ອງກ່ຽວກັບສະຖານະພາບຂອງການດຳເນີນງານຊຶ່ງກ່ຽວຂ້ອງກັບ ການປະຕິບັດງານຂອງພວກເຂົາ.

ກະຊວງຕ່າງໆ: ຫຼາຍກະຊວງ ແມ່ນກ່ຽວຂ້ອງໂດຍກົງໃນການອະນຸມັດ ແລະ ຄຸ້ມຄອງຫຼາຍຈຸດໃນຕ່ອງໂສ້ການສະໜອງ ຊຶ່ງກ່ຽວຂ້ອງກັບປ່າໄມ້ ປູກ ແລະ ອຸດສາຫະກຳປຸງແຕ່ງໄມ້ທີ່ກ່ຽວຂ້ອງ ແລະ ນັກລົງທຶນ. ບັນດາກະຊວງຫຼັກທີ່ກ່ຽວຂ້ອງໃນດ້ານ ປ່າໄມ້ປູກທີ່ເປັນໄມ້ເສດຖະກິດນັ້ນ ແມ່ນ ກະຊວງ ການເງິນ (ກງ), ກະຊວງ ກະສິກຳ ແລະ ປ່າໄມ້ (ກປ), ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຊສ), ກະຊວງ ອຸດສາຫະ ກຳ ແລະ ການຄ້າ (ອຄ), ແລະ ກະຊວງ ແຜນການ ແລະ ການລົງທຶນ (ຜລ). ຄວາມຮັບຜິດຊອບໂດຍລວມ ແມ່ນຢູ່ທີ່ຫ້ອງວ່າການສຳນັກງານນາຍົກ ລັດຖະມົນຕີ. ທຸກກະຊວງ ມີພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ຊຶ່ງອາດຈະບໍ່ຈຳເປັນຕ້ອງສອດຄ່ອງກັນກັບຂອງກະຊວງອື່ນ.

ການປະສານສົມທົບກັບບັນດາຊຸມຊົນ ແລະ ເຈົ້າຂອງທີ່ດິນຂະໜາດນ້ອຍ. ການປະສານສົມທົບກັນຢ່າງມີປະສິດທິຜົນ ລະຫວ່າງ ນັກລົງທຶນ ແລະ ບັນດາຊຸມຊົນ ແລະ ເຈົ້າຂອງທີ່ດິນຂະໜາດນ້ອຍ, ເຖິງແມ່ນວ່າ ພວກເຂົາບໍ່ແມ່ນຊາວສວນປູກຕົ້ນໄມ້ ກໍຕາມ, ແມ່ນສຳຄັນທີ່ສຸດ ເພາະວ່າ ທີ່ດິນ ເຂດບໍລິເວນປ່າຜະລິດແຫ່ງຊາດ ທີ່ຖືກຈັດສັນຢ່າງເປັນທາງການໃຫ້ແກ່ນັກລົງທຶນ ສຳລັບ ປູກໄມ້ເສດຖະກິດ ອາດຈະຖືກມອບໝາຍໃຫ້ແກ່ການ ນຳໃຊ້ທີ່ດິນກ່ອນໜ້ານີ້ແບບເປັນທາງການ ແລະ ບໍ່ເປັນທາງການ. ແນວທາງການຮ່ວມມື ແມ່ນນຳໃຊ້ຫຼັກການການຍິນຍອມ ທີ່ບໍ່ມີການບັງຄັບ, ຕ້ອງໄດ້ຮັບເຫັນດີລ່ວງໜ້າ ແລະ ທີ່ມີການແຈ້ງບອກຂໍ້ມູນທັງໝົດທີ່ກ່ຽວຂ້ອງກ່ອນ (FPIC) ຈະເປັນສິ່ງຈຳເປັນ.

[33] ທະນາຄານໂລກ (2019). ການເປັນຄູ່ຮ່ວມມື ແລະ ໂອກາດສຳລັບ ເສດຖະກິດໃໝ່ປ່າໄມ້ສີຂຽວ ໃນ ສປປ ລາວ: ການປົກປັກຮັກສາຂອບເຂດບໍລິເວນຂອງປ່າໄມ້ ແລະ ການ ດຳລົງຊີວິດຂອງປະຊາຊົນ. ທະນາຄານໂລກ. 88p." ມີໄວ້ທີ່: http://documents.worldbank.org/curated/en/706711560546421547/pdf/Partner-ships-and-Opportunities-for-a- New-Green-Forest-Economy-in-Lao-PDR-SustainingForest-Landscapes-and-Livelihoods.pdf

[34] ເບິ່ງ: https://www.aciar.gov.au/

[35] ກຸ່ມອິນເຕີລາກເກ້ນ (2020). ການປະຕິບັດງານ ແລະ ການຮ່ວມມືກັນ ເພື່ອສົ່ງເສີມການລົງທຶນປູກຕົ້ນໄມ້ທີ່ມີຄວາມຮັບຜິດຊອບ ໃນເຂດປ່າໄມ້ຜະລິດແຫ່ງຊາດ. ບົດບັນທຶກ ກອງປະຊຸມ. ເດືອນ ກຸມພາ 2020
ເບິ່ງ: https://www.interlakengroup.org/

ການຕີຄວາມໝາຍທາງດ້ານນິຕິກຳກ່ຽວກັບສິດຂອງຊຸມຊົນ ພາຍໃຈບໍລິເວນເຂດປ່າຜະລິດ ແລະ ຄວາມຊອບທຳຂອງການຮຽກຮ້ອງການຄອບຄອງທີ່ດິນຂອງພວກເຂົາ, ແລະ ການເບິ່ງຂ້າມທາງດ້ານລະບຽບການໂດຍທົ່ວໄປແລ້ວຍັງອ່ອນແອ, ເຮັດໃຫ້ເກີດພາລະຮັບຜິດຊອບຂອງບັນດາບໍລິສັດເອກະຊົນໃນການຢຶດໝັ້ນຕໍ່ກັບການປະຕິບັດທີ່ດີສຸດທາງດ້ານມາດຕະຖານ ທາງສັງຄົມ. ການບໍ່ປະຕິບັດຕາມ ຈະສົ່ງຜົນກະທົບທາງລົບຢ່າງຮ້າຍແຮງທາງດ້ານສັງຄົມ ສຳລັບ ບັນດາຊຸມຊົນທ້ອງຖິ່ນ ແລະ ຜົນຕາມມາ ກໍຈະເກີດຜົນກະທົບຕໍ່ບໍລິສັດ. ອາດຈະມີຜົນກະທົບຕາມມາຕໍ່ສິ່ງແວດລ້ອມທີ່ຮ້າຍແຮງ ຜ່ານການຕັດໄມ້ທຳລາຍປ່າເພີ່ມຕື່ມ ຊຶ່ງກ່ຽວຂ້ອງກັບການຖາງປ່າເຮັດໄຮ່ແບບເລື່ອນລອຍ, ເນື່ອງຈາກວ່າ ຊຸມຊົນທ້ອງຖິ່ນ ອາດຈະຊອກຫາດິນປ່າໃໝ່ ເພື່ອເຮັດການປູກຝັງ.

ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງທີ່ມີປະສິດທິຜົນ. ເຖິງວ່າມີການປະຕິຮູບໃນຂະແໜງປ່າໄມ້, ການຄຸ້ມຄອງທີ່ອ່ອນແອ ຍັງຄົງສືບຕໍ່ຂັດຂວາງຜະລິດຕະພາບ ແລະ ຄວາມຍືນຍົງ ແລະ ເຫັນໄດ້ເຖິງການຂາດຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດ ພາຍໃນບັນດາໜ່ວຍງານລັດທີ່ຮັບຜິດຊອບ; ການອະນຸຍາດສຳປະທານທີ່ບໍ່ຈະແຈ້ງ ແລະ ລະບຽບການອຸດສາຫະກຳສຳລັບການປູກໄມ້; ແລະ ການບັງຄັບໃຊ້ກົດໝາຍ ແລະ ລະບຽບການທີ່ມີຢູ່ບໍ່ພຽງພໍເໝາະສົມ[36]. ບັນຫາຂໍ້ຈຳກັດອື່ນໆທີ່ລະບຸໄວ້ໃນບົດສຶກສາຂອງທະນາຄານໂລກ ລວມເຖິງ ການປະສານງານລະຫວ່າງຂະແໜງການທີ່ບໍ່ພຽງພໍເໝາະສົມກ່ຽວກັບການວາງແຜນທີ່ເປັນຊ່ອງວ່າງ ເຮັດໃຫ້ເກີດການລະເມີດຂອບເຂດບໍລິເວນປົກປ້ອງ; ການຈັດສັນສຳປະທານທີ່ດິນ ຊຶ່ງຄອບຄອງໂດຍປະຊາຊົນໃນທ້ອງຖິ່ນທີ່ຊອບທຳ; ໄພຂົ່ມຂູ່ຕໍ່ຊີວິດການເປັນຢູ່ຂອງປະຊາຊົນທີ່ອາໄສປ່າໄມ້ ແລະ ຊຸມຊົນທີ່ດູແລປ່າໄມ້; ການພັດທະນາອຸດສາຫະກຳທີ່ບໍ່ສອດຄ່ອງກັນກັບການມີຢູ່ຂອງຊັບພະຍາກອນ; ແລະ ການຖ່ວງເວລາຂອງການລົງທຶນທີ່ຖືກຕ້ອງຂອງວິສາຫະກິດປ່າໄມ້ສາກົນ ແລະ ພາຍໃນປະເທດທີ່ໜ້າເຊື່ອຖື ຊຶ່ງປະຕິບັດຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ. ການຕີຄວາມໝາຍທີ່ຈະແຈ້ງ ແລະ ສອດຄ່ອງກັນ ແລະ ການນຳໃຊ້ນະໂຍບາຍຕ່າງໆ, ຫຼັກການ ແລະ ການປະຕິບັດຕົວຈິງຈາກຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ຍັງຄົງເປັນບັນຫາທ້າທາຍ.

ໃນບາງແຂວງ ຊຶ່ງມີເນື້ອທີ່ດິນເໝາະສົມສຳລັບການພັດທະນາປູກຕົ້ນໄມ້, ບັນຫາທ້າທາຍເພີ່ມຕື່ມ ແມ່ນ ການມີຢູ່ຂອງລະເບີດທີ່ຍັງບໍ່ແຕກ (UXO) ໃນທົ່ວບໍລິເວນທີ່ດິນ, ຊຶ່ງຮຽກຮ້ອງຕ້ອງການໃຫ້ມີການເກັບກູ້ ຊຶ່ງເກີດຕົ້ນທຶນຄ່າໃຊ້ຈ່າຍທີ່ສູງ ແລະ ບໍ່ສາມາດຄາດຄະເນໄດ້ ເພື່ອປົກປ້ອງບຸກຄະລາກອນ, ຊຸມຊົນ ແລະ ການລົງທຶນທາງເສດຖະກິດ.

ອຸດສາຫະກຳປຸງແຕ່ງໄມ້. ໂອກາດຕ່າງໆເພື່ອສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ເຮັດໃຫ້ເກີດທາງເລືອກຕະຫຼາດທີ່ຊອບທຳ ແລະ ການແຂ່ງຂັນສຳລັບອຸດສາຫະກຳປຸງແຕ່ງໄມ້ພາຍໃນປະເທດ. ສິ່ງອຳນວຍຄວາມສະດວກໃນການປຸງແຕ່ງທີ່ບໍ່ສອດຄ່ອງກັບຂີດຄວາມສາມາດຂອງຊັບພະຍາກອນພາຍໃນປະເທດ ອາດຈະຕ້ອງໄດ້ຜັດທະນາຂີດຄວາມສາມາດ ເພື່ອນຳເຂົ້າໄມ້ຈາກບັນດາປະເທດໃກ້ຄຽງ. ຂີດຄວາມສາມາດໃນການນຳເຂົ້າ ຫຼື ສົ່ງອອກໄມ້ເພື່ອຕອບສະໜອງກັບຄວາມຕ້ອງການຂອງການປຸງແຕ່ງຄວນຮັກສາໄວ້.

ຕະຫຼາດ ແລະ ການຂາຍ ທັງພາຍໃນ ແລະ ພາກພື້ນ. ໃນຂະນະທີ່ ນັກລົງທຶນໃນການປູກຕົ້ນໄມ້ເສດຖະກິດ ຈະມີຄວາມສົນໃຈ ແລະ ຜົນປະໂຫຍດຂອງພວກເຂົາເອງ ແລະ ເຂົ້າຮ່ວມໃນຕະຫຼາດ, ຂໍ້ມູນກ່ຽວກັບທ່າອ່ຽງຂອງຕະຫຼາດພາກພື້ນ ແລະ ຕະຫຼາດໂລກສຳລັບຜະລິດຕະພັນໄມ້ ເປັນປະໂຫຍດ ສຳລັບການຕັດສິນໃຈທີ່ໄດ້ຮັບຂໍ້ມູນ. ລະບົບໃນການແບ່ງປັນຄວາມຮູ້ກ່ຽວກັບຕະຫຼາດ ແລະ ເຕັກໂນໂລຊີໃໝ່ ແລະ ຜະລິດຕະພັນ ຍັງບໍ່ທັນມີເທື່ອ.

ບັນຫາທ້າທາຍທາງດ້ານເຕັກນິກ ແລະ ຊີວະວິທະຍາ. ຄຽງຄູ່ກັບບັນຫາທ້າທາຍທາງດ້ານສັງຄົມ ແລະ ການຄຸ້ມຄອງບໍລິຫານທີ່ກ່ຽວຂ້ອງກັບການຈັດສັນທີ່ດິນ ກໍຍັງມີບັນຫາທ້າທາຍທາງດ້ານເຕັກນິກ ແລະ ຊີວະວິທະຍາຢ່າງຫຼວງຫຼາຍ, ລວມທັງ ການຄັດເລືອກ ພັນຕົ້ນໄມ້ປູກທີ່ເໝາະສົມກັບດິນ ແລະ ສະພາບເງື່ອນໄຂຂອງທ້ອງຖິ່ນ, ການຈຳກັດຄວາມສ່ຽງທາງດ້ານເຕັກນິກໃຫ້ມີໜ້ອຍສຸດ ເຊັ່ນ ແມງໄມ້ ແລະ ພະຍາດ, ແລະ ລະບົບວິຊາການປູກປ່າ ຊຶ່ງເຮັດໃຫ້ການປູກຕົ້ນໄມ້ສາມາດຖືກຄຸ້ມຄອງຈັດການ ແລະ ເກັບກ່ຽວໄດ້ໃນລັກສະນະທີ່ຍືນຍົງ ແລະ ມີຜົນຜະລິດສູງຕະຫຼອດຫຼາຍຊ່ວງຂອງການຜັດປ່ຽນຊຸດຕົ້ນໄມ້ປູກ.

ການຄົ້ນຄວ້າວິໄຈ, ການພັດທະນາ ແລະ ການຝຶກອົບຮົມ. ເພື່ອຮັບປະກັນການນຳໃຊ້ທີ່ມີປະສິດທິຜົນທີ່ສຸດ ທີ່ໄດ້ຈາກດິນ ແລະ ຊັບພະຍາກອນທີ່ມີຢູ່ນັ້ນ, ຊັບສິນຕົ້ນໄມ້ທີ່ປູກ ຄວນຖືກຄຸ້ມຄອງຈັດການ ເພື່ອຮັບປະກັນຜົນໄດ້ຮັບທາງດ້ານກາຍະພາບ, ດ້ານຊີວະວິທະຍາ, ດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ດີສຸດ ໂດຍນຳໃຊ້ການປະຕິບັດຕົວຈິງທີ່ດີສຸດທີ່ມີຢູ່ນັ້ນ. ຄວາມຮູ້ເພື່ອຮັກສາໄວ້ຜະລິດຕະພາບຂອງສະຖານທີ່ ແລະ ການຄຸ້ມຄອງຄວາມສ່ຽງ ຈະຂຶ້ນກັບການເຂົ້າເຖິງການຄົ້ນຄວ້າວິໄຈ ແລະ ການພັດທະນາທີ່ທັນການ. ໃນຂະນະທີ່ ບາງການລົງທຶນປູກຕົ້ນໄມ້ລາຍໃຫຍ່ ຈະເຮັດການຄົ້ນຄວ້າວິໄຈ, ການພັດທະນາ ແລະ ສິ່ງອຳນວຍຄວາມສະດວກໃນການຝຶກອົບຮົມຂອງພວກເຂົາເອງ, ການຮ່ວມມືກັບ ບັນດາໜ່ວຍງານແຫ່ງຊາດ ເຊັ່ນ ມະຫາວິທະຍາໄລ, ວິທະຍາໄລວິຊາຊີບ ແລະ ສະຖາບັນຄົ້ນຄວ້າ ຈະມີຄວາມສຳຄັນຍິ່ງ.

ບາງບັນຫາທ້າທາຍອື່ນໆ: ຜົນໄດ້ຮັບທີ່ຄາດວ່າຈະເກີດຂຶ້ນທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຍັງຄົງເປັນບັນຫາສຳຄັນຕົ້ນຕໍ ສຳລັບການລົງທຶນ ແລະ ການກວດກາ ແມ່ນຂຶ້ນກັບ ການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA) ທີ່ໂປ່ງໃສ ແລະ ການກວດກາດ້ານສິ່ງແວດລ້ອມໃນເບື້ອງຕົ້ນ (IEE). ຂໍ້ກຳນົດຂອງ IEE ແລະ ESIA ໃນປະຈຸບັນ, ໂດຍອີງໃສ່ ຄວາມຮຽກຮ້ອງຕ້ອງການສຳລັບການລົງທຶນໃນຂະແໜງພະລັງງານນ້ຳ ແລະ ບໍ່ແຮ່, ອາດຈະບໍ່ເໝາະສົມສຳລັບ ການລົງທຶນປູກຕົ້ນໄມ້, ມີທ່າອ່ຽງສູງໃນການເຮັດໃຫ້ເກີດຄ່າໃຊ້ຈ່າຍ ແລະ ຄວາມລ່າຊ້າທີ່ບໍ່ຈຳເປັນ ທີ່ບໍ່ໄດ້ປະກອບສ່ວນຢ່າງຫຼວງຫຼາຍ ໃຫ້ແກ່ການລົງທຶນທີ່ມີຄວາມຮັບຜິດຊອບ.

[36] ທະນາຄານໂລກ (2019).ການປົກປັກຮັກສາຂອບເຂດບໍລິເວນຂອງປ່າໄມ້ ແລະ ການດຳລົງຊີວິດຂອງປະຊາຊົນ

ບັນຫາຕ່າງໆກ່ຽວກັບການອາຍັດການກອບທີ່ເພີ່ມຂຶ້ນຈາກ ລັກສະນະພູມສັນຖານທີ່ປູກຕົ້ນໄມ້ເປັນຫຼັກ ຍັງບໍ່ທັນໄດ້ມີເຫດຜົນຈະແຈ້ງເທື່ອ. ບັນຫາກ່ຽວກັບຂັ້ນຕອນ ແລະ ລະບຽບການທີ່ເປັນທ່າແຮງ ທີ່ໄດ້ຖືກລະບຸໄວ້ລວມມີ:

- ເນື້ອທີ່ດິນທີ່ໃກ້ຄຽງຕິດກັບການສຳຫຼວດບໍ່ແຮ່ທີ່ຍັງບໍ່ໄດ້ຖືການຳໃຊ້ ແລະ ການຂຸດຄົ້ນສຳປະທານ;
- ຜົນທະທີ່ບໍ່ຈະແຈ້ງ ຕໍ່ກັບນະໂຍບາຍຈູງໃຈທີ່ຮັບຮອງ-ທາງດ້ານກົດໝາຍ ພາຍໃຕ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;
- ການທົບທວນຄືນ ແລະ ກຳນົດໂຄງສ້າງຄືນໃໝ່ກ່ຽວກັບຄ່າທຳນຽມ ແລະ ອາກອນສຳລັບ ເນື້ອທີ່ບໍລິເວນປ່າປູກໃໝ່ ທີ່ມີຜົນຕົ້ນໄມ້ພື້ນເມືອງພາຍໃນບໍລິເວນສຳປະທານ;
- ການສ້າງມາດຕະຖານຂອງການຈັດການແບ່ງປັນ-ຜົນປະໂຫຍດ ທົ່ວທັງການລົງທຶນປູກຕົ້ນໄມ້; ແລະ
- ການສ້າງມາດຕະຖານ ແລະ ການບັງຄັບໃຊ້ການສ້າງຄືນໃໝ່ ແລະ ຂໍ້ກຳນົດຕ່າງໆ ກ່ອນການປິດໂຄງການ.

ຜົນກະທົບຕໍ່ ສປປ ລາວ

ບັນຫາທ້າທາຍຕໍ່ກັບການລົງທຶນທີ່ອະທິບາຍຂ້າງເທິງນັ້ນ ຈະສົ່ງຜົນກະທົບຕໍ່ກັບການສ້າງຕັ້ງ ແລະ ການຄຸ້ມຄອງການປູກຕົ້ນໄມ້ເສດຖະກິດ ໃນຫຼາຍລະດັບທີ່ແຕກຕ່າງກັນ ອີງຕາມສະຖານທີ່ ແລະ ສະຖານະການ, ແລະ ທັງໝົດນັ້ນ ຈະຕ້ອງການໃຫ້ເອົາໃຈໃສ່, ຈຳກັດໃຫ້ມີໜ້ອຍສຸດ ແລະ ທາງແກ້ໄຂ ໂດຍບັນດານັກລົງທຶນ. ອີກດ້ານໜຶ່ງ, ຜົນກະທົບທີ່ເປັນປະໂຫຍດທັນທີ ຕໍ່ກັບ ສປປ ລາວ ຈະລວມເຖິງ ການສ້າງປ່າໄມ້ປູກທີ່ຄືກຄົ້ນ ຊຶ່ງເປັນຊັບສິນຂອງນັກລົງທຶນ, ແລະ ຊຶ່ງສ້າງຜົນປະໂຫຍດເບື້ອງຕົ້ນ ສຳລັບຜູ້ທີ່ມີສ່ວນກ່ຽວຂ້ອງໃນການຄຸ້ມຄອງປູກຕົ້ນໄມ້ເຫຼົ່ານັ້ນ, ໂດຍສະເພາະ ຊຸມຊົນຕ່າງໆ ແລະ ຊາວສວນແຕ່ລະຄົນທີ່ຖືກຈ້າງງານໃນການປູກຕົ້ນໄມ້. ການປູກຕົ້ນໄມ້ທີ່ມີການຄຸ້ມຄອງຈັດການຢ່າງດີ ຈະສ້າງລາຍຮັບຢ່າງຫຼວງຫຼາຍໃຫ້ແກ່ ນັກລົງທຶນ, ຊຸມຊົນ ແລະ ລັດຖະບານ ເມື່ອຕົ້ນໄມ້ຖືກເກັບກ່ຽວ ແລະ ປຸງແຕ່ງ ແລະ ຈະຈັດໃຫ້ມີ ຊັບພະຍາກອນ ສຳລັບອຸດສາຫະກຳປຸງແຕ່ງທີ່ທັນສະໄໝ. ການຜັດປ່ຽນຊຸດຕົ້ນໄມ້ປູກເທື່ອທີສອງ ແລະ ເທື່ອທີສາມ ກໍຈະເຮັດໃຫ້ເກີດຜົນປະໂຫຍດຄ້າຍຄືກັນ.
ປະເທດຊາດຈະໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍຈາກ ຊັບສິນຕົ້ນໄມ້ປູກແບບຍືນຍົງ ທີ່ສ້າງຂຶ້ນໂດຍນັກລົງທຶນ, ແລະ ວຽກເຮັດງານທຳ, ລາຍໄດ້ ແລະ ໂອກາດຕ່າງໆສຳລັບ ປະຊາຊົນລາວ, ການໄດ້ຮັບລາຍໄດ້ຈາກການສົ່ງອອກຜະລິດຕະພັນໄມ້ ແລະ ຈາກອາກອນທີ່ຈ່າຍໃຫ້ໂດຍ ບັນດາວິສາຫະກິດປູກຕົ້ນໄມ້. ສິ່ງອຳນວຍຄວາມສະດວກໃນການປຸງແຕ່ງໄມ້ທີ່ໃໝ່ ແລະ ມີປະສິດທິພາບ ຈະສ້າງ ແລະ ຈະອີງໃສ່ການສະໜອງໄມ້ທີ່ເຊື່ອຖືໄດ້ຈາກການປູກໄມ້ທີ່ມີການຄຸ້ມຄອງຈັດການແບບຍືນຍົງ. ຜູ້ຈັດການຕົ້ນໄມ້ປູກ ຈະກໍ່ໃຫ້ເກີດຜົນປະໂຫຍດແກ່ປະເທດຊາດ ໂດຍການສະໜັບສະໜູນ ແລະ ພັດທະນາ ການຄົ້ນຄວ້າວິໄຈປ່າໄມ້ທີ່ມີຄຸນຄ່າ, ບຸກຄະລາກອນຄົ້ນຄວ້າວິໄຈທີ່ໄດ້ຮັບການຝຶກອົບຮົມ, ຊ່ວຍໃນການປັບປຸງການຄຸ້ມຄອງຈັດການປ່າໄມ້ຂອງ ບັນດາໜ່ວຍງານຂອງລັດ ແລະ ເຈົ້າຂອງທີ່ດິນຂະໜາດນ້ອຍຢູ່ບ່ອນອື່ນໆໃນ ສປປ ລາວ.
ຜົນກະທົບທີ່ເປັນປະໂຫຍດຢ່າງຫຼວງຫຼາຍສຳລັບ ສປປ ລາວ ຈະເຮັດໃຫ້ເກີດຜະລິດຕະພາບສູງຂຶ້ນ ແລະ ການນຳໃຊ້ທີ່ດິນໃຫ້ເກີດປະໂຫຍດຕໍ່ສິ່ງແວດລ້ອມຫຼາຍຂຶ້ນ ສຳລັບ ບໍລິເວນເນື້ອທີ່ດິນຂະໜາດໃຫຍ່ທີ່ເປັນເຂດບໍລິເວນປ່າຜະລິດທີ່ເສື່ອມໂຊມ, ແລະ ປັບປຸງການກວມເອົາເນື້ອທີ່ປ່າໄມ້ໄດ້.

ຜົນກະທົບທີ່ເປັນປະໂຫຍດເຫຼົ່ານີ້ ຈະສາມາດບັນລຸໄດ້ ຖ້າຫາກ ນັກລົງທຶນ ເຊື່ອໝັ້ນວ່າ ສະພາບເງື່ອນໄຂຂອງການລົງທຶນ ແມ່ນເອື້ອອຳນວຍ ແລະ ອຸປະສັກຕ່າງໆຕໍ່ກັບການລົງທຶນນັ້ນ ສາມາດຖືກລົບລ້າງ ຫຼື ຈຳກັດໃຫ້ມີໜ້ອຍສຸດ. ການທົບທວນຄືນຂໍ້ກຳນົດຕ່າງໆ ແລະ ຂັ້ນຕອນ ແມ່ນຈຳເປັນ ເພື່ອເຮັດໃຫ້ໂອກາດໃນການລົງທຶນນັ້ນກະທັດຮັດງ່າຍດາຍ ໃນຂະນະດຽວກັນ ກໍຮັບປະກັນວ່າ ຂໍ້ກຳນົດ ແລະ ການປ້ອງກັນທີ່ຈຳເປັນນັ້ນ ລວມເຖິງ FPIC ແລະ ອື່ນໆ ແມ່ນມີໄວ້ຢ່າງຈະແຈ້ງ, ນຳໃຊ້ຢ່າງສອດຄ່ອງກັນທົ່ວປະເທດສຳລັບການລົງທຶນປູກຕົ້ນໄມ້ທັງໝົດ, ແລະ ຖືກຄຸ້ມຄອງໃນຮູບແບບທີ່ໂປ່ງໃສ.

ຂໍ້ສະເໜີແນະນຳ

ຂະບວນການທີ່ເປັນທາງການຊຶ່ງກ່ຽວຂ້ອງກັບການກຳນົດບໍລິເວນພື້ນທີ່ສຳລັບການປູກຕົ້ນໄມ້ເສດຖະກິດພາຍໃນເຂດບໍລິເວນປ່າຜະລິດ ແລະ ຈາກນັ້ນ, ການຈັດສັນບໍລິເວນພື້ນທີ່ເໝາະສົມ ສຳລັບການປູກຕົ້ນໄມ້ເສດຖະກິດ ແມ່ນສິ່ງສຳຄັນຍິ່ງ ສຳລັບ ການລົງທຶນໄລຍະຍາວທີ່ຖືກຕ້ອງຕາມກົດໝາຍ.

> <u>ຂໍ້ແນະນຳວ່າ</u> ບັນດານັກລົງທຶນ ຄວນເຮັດວຽກຢ່າງໃກ້ຊິດກັບໜ່ວຍງານຕ່າງໆຂອງພາກລັດ ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອຈັດໃຫ້ການຕີຄວາມໝາຍຂອງກົດໝາຍ ແລະ ລະບຽບການຕ່າງໆໃຫ້ຈະແຈ້ງ ແລະ ປະຕິບັດເປັນເອກະພາບສອດຄ່ອງກັນ.

ບັນດາຊຸມຊົນ ແລະ ເຈົ້າຂອງດິນຂະໜາດນ້ອຍທີ່ມີດິນເຊື່ອມຕໍ່ຕິດກັບທີ່ດິນບໍລິເວນປ່າຜະລິດ ຊຶ່ງໄດ້ຖືກຈັດສັນຢ່າງເປັນທາງການໃຫ້ແກ່ນັກລົງທຶນເພື່ອປູກຕົ້ນໄມ້ເສດຖະກິດ ອາດຈະມີຄວາມກ່ຽວຂ້ອງກັບທີ່ດິນແບບເປັນທາງການ ແລະ ບໍ່ເປັນທາງການມາກ່ອນໜ້າ. ການຮ່ວມມືກັບບັນດາຊຸມຊົນ ແມ່ນສຳຄັນຍິ່ງ ເພື່ອເຂົ້າໃຈການຕີຄວາມໝາຍຂອງນິຕິກຳກ່ຽວກັບ ສິດຂອງຊຸມຊົນທີ່ຖືກຜົນກະທົບ ແລະ ຄວາມຊອບທຳຂອງການຮຽກຮ້ອງຄອບຄອງທີ່ດິນທາງດ້ານກົດໝາຍ ຊຶ່ງເຮັດໃຫ້ເກີດພາລະຄວາມຮັບຜິດຊອບຂອງບັນດາບໍລິສັດເອກະຊົນທີ່ຍຶດໝັ້ນກັບມາດຕະຖານການປະຕິບັດ-ທີ່ດີສຸດສຳລັບການລົງທຶນ.

ຂໍແນະນຳວ່າ ບັນດາບໍລິສັດ ຍຶດໝັ້ນໃນການປະຕິບັດຕາມຂັ້ນຕອນທີ່ແນະນຳ ໂດຍໃຊ້ຫຼັກການການຍິນຍອມທີ່ບໍ່ມີການບັງຄັບ, ຕ້ອງ ໄດ້ຮັບເຫັນດີລ່ວງໜ້າ ແລະ ທີ່ມີການແຈ້ງບອກຂໍ້ມູນທັງໝົດທີ່ກ່ຽວຂ້ອງກ່ອນ (FPIC) ໃນການດຳເນີນການກັບບັນດາຊຸມຊົນທີ່ຖືກ ຜົນກະທົບ, ພ້ອມກັບ ຫຼັກການ ທີ່ສາມາດເຂົ້າເຖິງໄດ້ທົ່ວໄປ ແລະ ໂປ່ງໃສຂອງ ESIA ຫຼື IEE ດັ່ງທີ່ກຳນົດໄວ້ໃນກົດໝາຍ.

ຂະແໜງການປູກຕົ້ນໄມ້ທີ່ຂະຫຍາຍອອກ ແລະ ຖືກຄຸ້ມຄອງຈັດການແບບຍືນຍົງ ຈະເຮັດໃຫ້ເກີດຜົນປະໂຫຍດຢ່າງໃຫຍ່ຫຼວງຕໍ່ ສປປ ລາວ, ຊຶ່ງການຈັດໃຫ້ມີການນຳໃຊ້ທີ່ດິນຂອງຊາວສວນ ແລະ ເຂດບໍລິເວນປ່າຜະລິດທີ່ເສື່ອມໂຊມເພື່ອກໍ່ໃຫ້ເກີດຜົນຜະລິດສູງ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ຜົນກະທົບທີ່ເປັນປະໂຫຍດນີ້ ຈະເກີດຂຶ້ນໄດ້ ກໍຕໍ່ເມື່ອວ່າ ນັກລົງທຶນ ຍັງຄົງເຊື່ອໝັ້ນວ່າ ສະພາບເງື່ອນໄຂສຳລັບການລົງທຶນ ຍັງຄົງ ເອື້ອອຳນວຍ ແລະ ບັນດາກົດໝາຍ ແລະ ລະບຽບການ ແມ່ນຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບດຽວ ແລະ ສອດຄ່ອງກັນ.

ຂໍແນະນຳວ່າ ລັດຖະບານ ແລະ ນັກລົງທຶນ ເຮັດວຽກຮ່ວມກັນ ເພື່ອຮັບປະກັນວ່າ ບັນດາກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແມ່ນບັງຄັບໃຊ້ຢ່າງສອດຄ່ອງເປັນເອກະພາບກັນ ແລະ ຄວນພິຈາລະນາໃນການສະເໜີໃຫ້ມີການສ້າງຕັ້ງ ໜ່ວຍງານການປະຕິບັດກົດໝາຍ ແຫ່ງຊາດ ສຳລັບ ປ່າໄມ້ປູກ ແລະ ມາດຕະຖານປ່າໄມ້ແຫ່ງຊາດ.

ເອກະສານອ້າງອີງ ແລະ ອ່ານເພີ່ມຕື່ມ

ADB (2010). Sector Assistance Program Evaluation for the Transport Sector in the Lao People's Democratic Republic. Available at: https://www.adb.org/documents/transport-sector-lao-peoples- democratic-republic

Arnold, R. J., Midgley, S. J. and Doran J. C. (2020) (In prep). Global Eucalypts: the resource expands. To be submitted to International Forest Research.

Arnold, R. J., Xie, X. J., Midgley, S. J., Luo, J. Z. and Chen, X. F. (2013). Emergence and rise of eucalypt veneer production in China. International Forestry Review Vol. 15 (1). 15p.

Food and Agriculture Organization of the United Nations (2015). Forest Resources Assessment. https://agris.fao.org/agris-search/search.do?recordID=XF2017001127

Frederick Cubbage, Bruno Kanieski, Rafael Rubilar, Adriana Bussoni, Virginia Morales Olmos, Gustavo Balmelli, Patricio Mac Donagh, Roger Lord, Carmelo Hernandez, Pu Zhang, Jin Huang, Jaana Korhonen, Richard Yao, Peter Hall, Rafael Del La Torre, Luis Diaz-Balteiro, Omar Carrero, Elizabeth Monges, Ha Tran Thi Thu, Gregory Frey, Mike Howard, Michael Chavet, Shaun Mochan, Vitor Afonso Hoeflich, Rafal Chudy, David Maass, Stephanie Chizmar, Robert Abt (2020). Global timber investments, 2005 to 2017. Forest Policy and Economics Volume 112. https://doi.org/10.1016/j.forpol.2019.102082

Hawkins Wright (2019). A review of woodchip supply and demand in the Asian Pacific Rim. An overview of the seaborne trade of woodchips used for pulp production in South East Asia. 51p.
Hetemäki, L., Palahí, M. and Nasi, R. 2020. Seeing the wood in the forests. Knowledge to Action 01, European Forest Institute. https://doi.org/10.36333/k2a01

IFC (2018). Diagnostic Assessment of Outgrower Schemes and Demonstration Pilots in Lao PDR. IFC Lao Agro Forestry Project #594367 Prepared by IFC Manufacturing Agribusiness and Services (MAS), Advisory Services. February 2018, Vientiane, Lao PDR. 56pp.
Indufor (2012). Strategic review on the future of forest plantations. Report prepared for the Forest Stewardship Council. Helsinki.

Interlaken Group (2020). Joint Action and Collaboration for the Promotion of Responsible Tree Plantation Investment in National Production Forest Areas. Minutes of meeting. February 2020

Midgley S. J. and Ruenrith, P. (2020). An initial assessment of the size and utilisation of the eucalypt resource in NE Thailand and possible impacts for Lao PDR. Thai Field Notes: 24 – 27 February, 2020. Report to ACIAR Project *Advancing enhanced wood manufacturing industries in Laos and Australia* (VALTIP3).

Midgley, S. J. (2019). Prospects for Eucalypts in Northern Lao PDR. A report to ACIAR project FST/2012/041 "Teak-based agroforestry systems to enhance and diversify smallholder livelihoods in Luang Prabang province of Lao PDR". Australian Centre for International Agricultural Research, Canberra, Australia.

Midgley, S. J., Stevens, P. R. and Arnold R. J. (2017). Hidden Assets: Asia's Smallholder Wood Resources, and their Contribution to Supply Chains of Commercial Wood. Australian Forestry 80 (1). Pp 10-25. http://dx.doi.org/10.1080/00049158.2017.1280750.

Midgley, S. J. (2006). *The Tree Plantation Sector Development in Lao PDR*. Position Paper for Forestry Strategy 2020 Implementation Promotion Project (FSIP), Department of Forestry, Lao PDR. 119pp.
Nambiar EKS, Harwood CE. 2014. Productivity of acacia and eucalypt plantations in Southeast Asia. 1. Bio-physical determinants of production opportunities and challenges. International Forestry Review Vol.16(2), 225-248.

New Generations Plantations (2018). New Generation Plantation Platform 2007 – 2017. *Plantations for people, planet and prosperity*. 103 p. Accessed at: https://newgenerationplantations.org/multimedia/file/ff98c77e-77cb-11e3-92fa-005056986314

Sousath Sayakoummane and Vongxay Manivong (2007). Environmental Impacts of Trade Liberalization in the Wood and Wood Products Sector, Lao PDR. Background Research Paper, Rapid Trade & Environment Assessment Project. International Institute for Sustainable Development (IISD). 15 p. Available at: https://www.iisd.org/pdf/2008/rtea_lao_wood.pdf

Stuart Ling, Hilary Smith, Stephen Midgley, Keith Barney and Peter Kanowski (2020). Value Chain Assessment: Interim Summary Report – Eucalypt plantations in Laos from a smallholder perspective (DRAFT). ACIAR Project FST/2016/151: Advancing enhanced wood manufacturing industries in Laos and Australia

The World Bank (2019). Partnerships and Opportunities for a New Green Forest Economy in Lao PDR: Sustaining Forest Landscapes and Livelihoods. The World Bank. 88p."Available at: http://documents.worldbank.org/curated/en/706711560546421547/pdf/Partnerships-and- Opportunities-for-a-New-Green-Forest-Economy-in-Lao-PDR-SustainingForest-Landscapes-and- Livelihoods.pdf

Vannitha Kimanivong (2018). Strategy on Freight Transport and Logistics Development in Lao PDR. Presentation to Workshop on Strengthening Transport Connectivity among CLMVT. Yangon, Myanmar, 9 – 10 October 2018. Department of Transport, Ministry of Public Works and Transport, Lao PDR.

Verdone, M (2018). The world's largest private sector? *Recognising the cumulative economic value of small-scale forest and farm producers*. Gland, Switzerland: IUCN, FAO, IIED and Agricord. X +22pp.
WWF (2012). Living Forests Report. Chapter 4.

ເອກະສານຄັດຕິດ 1: ບໍລິສັດທາງລົດໄຟລາວ-ຈີນ ຈຳກັດ. ການສົ່ງເສີມການຂົນສົ່ງ:

Vientiane Times

Laos-China Railway Freight Business Promotion Announcement

The Laos China Railway, Boten to Vientiane Line (referred to as "Laos China Laos China Railway") starts from the Lao border from Boten, and passes south to the northern part of Laos through the province of Luang Namtha, Udomxay, Luang Prabang, Vientiane Province and finally arriving in Vientiane, the capital city of Laos, it is scheduled to officially open for service by the end of 2021. The Laos China Railway is is the most convenient railway link between China and ASEAN. It is built and operated by Laos China Railway Co., Ltd. ("LCRC"). In 2018, the trade volume between China and ASEAN exceeded US$580 billion. Railway transportation has the advantages of large transportation volume, low freight rate, fast speed, safety and reliable, and environmental friendly. China and ASEAN have a large railway transportation demand for trade and economic exchange.

By the end of 2021, Laos China Railway will begin cargo transportation from Boten to Vientiane South station. Laos China Railway will operate international freight transport train between China and Laos, China and Thailand and between China and ASEAN, and will be able to reach Europe. . It can undertake container transportation and steel cargo transportation. 9 stations will be in service at Boten, Namtha, Meungxay, Mengna, LuangPrabang, Kasi, Vangvieng, Phonghong and Vientiane South handling cargo transportation, and can provide loading, unloading, warehousing and logistics, distribution, customs clearance, cargo insurance and other services according to the needs of customers,.

In order to promote China's "One Belt and One Road" initiative and the transformation of Laos from a landlocked country into a land linked country strategy, and quickly promote the economic development of Laos and Lao-China railway, LCRC is currently conducting cargo business investigations to support construction, warehousing logistics, loading and unloading facilities and the purchase of corresponding railway vehicles. LCRC will give priority to customers who have signed the freight intent agreement in advance, and provide a convenient, fast and punctual cargo service.

To establish a good partnership with customers in advance, companies interested in usingrail transportation must fill out their business requirement form as per attachment and send them to the company's email. LCRC will organize related business negotiations according to the business needs of the customers.Sincerely look forward to working with you to create a better future.

At the same time, we sincerely invite customers to contact us to discuss the use of the Laos China railway buildings/structures and vehicle interior facilities to carry out advertising business cooperation.

This announcement is valid for a long time. The first batch of submission deadline is October 31, 2019.

Contact Information
Ms. Feng Jianxiang (Chinese and English) Tel: +85658104188
Ms. Thipamphay (Lao / Thai) Tel: +85696236923
Mr. Dong Tiansheng (Chinese and English) Tel: +85659973292
Email: hyb@lcrc.ltd

Ms. Huang Ju (Advertisement Business) Tel: + 856021229986 (Chinese/ Lao/English/ Thai)
Email: kfb@lcrc.ltd

Welcome to call us or write to us.

Laos China Railway C...

ECCIL
EUROCHAM LAOS

ວິລາ ອິນແປງ, ຕັ້ງຢູ່ເຮືອນເລກທີ 74, ຖະນົນອິນແປງ ບ້ານວັດຈັນ,
ນະຄອນຫຼວງວຽງຈັນ, ຕູ້ໄປສະນີ: 11781 ເມືອງຈັນທະບລີ, 1000
ໂທ: +856 21 264 330
ອີເມວ: contact@eccil.org
ເວັບໄຊ: www.eccil.org